Lao People's Democratic Republic
Ministry of Agriculture and Forestry

# Sustainable Forest Management and REDD+ Support Project in Lao People's Democratic Republic

# Completion Report (Term I)
# Summary in Lao language

December 2017

Japan International Cooperation Agency (JICA)

Kokusai Kogyo Co., Ltd.

| |
|---|
| GE |
| JR |
| 17-143 |

# I. ພາກແນະນຳ

## 1. ປະເທດ:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## 2. ຊື່ໂຄງການ:

ໂຄງການສະໜັບສະໜູນ ການຄຸ້ມຄອງປ່າໄມ້ແບບຍືນນານ ແລະ REDD+

## 3. ໄລຍະໂຄງການ:

2015.10 – 2020.10 (5 ປີ)

ໄລຍະທີ 1: 2015.11 – 2017.12

## 4. ປະຫວັດຄວາມເປັນມາ:

ໃນຊຸມປີ 1940, ເນື້ອທີ່ປົກຫຸ້ມປ່າໄມ້ຂອງ ສປປ ລາວ ປົກຄຸມກ່ວາ 70%. ຕົວເລກດັ່ງກ່າວໄດ້ຫຼຸດລົງຢ່າງໄວວາ ຄື 40% ໃນປີ 2010, ຊຶ່ງສາເຫດສ່ວນໃຫຍ່ແມ່ນມາຈາກການປ່ຽນແປງຮູບແບບຂອງການນຳໃຊ້ທີ່ດິນເຊັ່ນ: ການສ້າງເຂື່ອນໄຟຟ້າ, ການຂຸດຄົ້ນບໍ່ແຮ່ ແລະ ການປູກໄມ້ເປັນອຸດສາຫະກຳ. ລັດຖະບານແຫ່ງ ສປປ ລາວ ໄດ້ກຳນົດຍຸດທະສາດປ່າໄມ້ຮອດປີ 2020 ໂດຍມີເປົ້າໝາຍເຮັດໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ເພີ່ມຂຶ້ນເປັນ 70% ໃນຂອບເຂດທົ່ວປະເທດ. ນອກນັ້ນ, ລັດຖະບານລາວຍັງຖືເອົາວຽກງານຫຼຸດຜ່ອນການປ່ອຍທາດອາຍພິດຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າເສື່ອມໂຊມ ຫຼື REDD+ ເປັນວຽກງານໜຶ່ງທີ່ສຳຄັນເພື່ອສ້າງໂອກາດໃຫ້ວຽກງານຄຸ້ມຄອງປ່າໄມ້ໃຫ້ຮັບການປັບປຸງດີຂຶ້ນ ແນໃສ່ເພື່ອສ້າງລາຍຮັບທາງດ້ານການເງິນ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃນເຂດຊົນນະບົດໃຫ້ນັບມື້ນັບດີຂຶ້ນເລື້ອຍໆ ໂດຍຈັດຕັ້ງໜ່ວຍງານສະເພາະກິດຮັບຜິດຊອບ ວຽກງານ REDD+ ໃນລະດັບຊາດຂຶ້ນ ແລະ ຄະນະຮັບຜິດຊອບດັ່ງກ່າວກຳລັງສ້າງຄວາມພ້ອມສຳລັບວຽກງານ REDD+ ສຳລັບ ສປປ ລາວ.

ເຊັ່ນດຽວກັນ, ວຽກງານ REDD+ ຮຽກຮ້ອງໃຫ້ມີຂໍ້ມູນຂ່າວສານກ່ຽວກັບຊັບພະຍາກອນປ່າໄມ້ຢ່າງຖືກຕ້ອງ ແລະ ຊັດເຈນ ເຊັ່ນຕົວຢ່າງ: ການແປພາບຖ່າຍທາງດາວທຽມ ຊຶ່ງລັດຖະບານລາວ ຍັງບໍ່ທັນມີວິຊາການຢ່າງພຽງພໍ ເພື່ອວິເຄາະຂໍ້ມູນກ່ຽວກັບວຽກງານ REDD+ ດັ່ງກ່າວ ເວົ້າລວມແລ້ວແມ່ນຍັງຂາດວິຊາການເພື່ອເກັບກຳ ແລະ ວິເຄາະຂໍ້ມູນ ເຮັດໃຫ້ການຈັດຕັ້ງດຳເນີນວຽກງານຄຸ້ມຄອງປົກປັກຮັກສາປ່າໄມ້ໂດຍຜ່ານ REDD+ ຍັງບໍ່ທັນໄດ້ເຕັມຮູບແບບເທື່ອ.

ອີງໃສ່ສະພາບຂອງຄວາມເປັນມາດັ່ງກ່າວ ລັດຖະບານລາວຈຶ່ງໄດ້ສະເໜີຮ້ອງຂໍໄປຍັງລັດຖະບານຍີ່ປຸ່ນ ເພື່ອຈັດຕັ້ງໂຄງການກຳນົດຍຸດທະສາດ ແລະ ນະໂຍບາຍເພື່ອຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ສົ່ງເສີມວຽກງານ REDD+ ຂຶ້ນໂດຍທັງສອງຝ່າຍໄດ້ຕົກລົງເຫັນດີຈັດຕັ້ງປະຕິບັດໂຄງການດັ່ງກ່າວນັບແຕ່ເດືອນທັນວາ 2014 ເປັນຕົ້ນມາ. ໄລຍະກະກຽມໂຄງການ 9 ເດືອນ (F-PREP) ໄດ້ສຳເລັດການຮ່າງແຜນຈັດຕັ້ງປະຕິບັດໂຄງການ ແລະ ຄະນະວິຊາການຈາກສຳນັກງານໃຫຍ່ຂອງ JICA ໄດ້ດຳເນີນການສຳຫຼວດອອກແບບໂຄງການຢ່າງລະອຽດ ແລະ ສຳເລັດໃນເດືອນມີນາ 2015 ໂດຍໄດ້ຕົກລົງເຫັນດີ ແລະ ເປັນເອກະພາບໃນທຸກເນື້ອໃນຂອງໂຄງການໃນເດືອນດຽວກັນ. ອີງໃສ່ຜົນໄດ້ຮັບດັ່ງກ່າວ ທັງສອງຝ່າຍໄດ້ຕົກລົງເຫັນດີປ່ຽນຊື່ໂຄງການມາເປັນ ໂຄງການສະໜັບສະໜູນການຄຸ້ມຄອງປ່າໄມ້ແບບຍືນນານ ແລະ REDD+ ໂດຍດັດແກ້ເອກະສານບົດບັນທຶກການປຶກສາຫາລື (Record of Discussions) ແລະ ລົງລາຍເຊັນຮ່ວມກັນໃນເດືອນກໍລະກົດ 2015. ໂຄງການດັ່ງກ່າວ ແມ່ນເລີ່ມຈັດຕັ້ງປະຕິບັດເປັນເວລາ 5 ປີ ນັບແຕ່ເດືອນຕຸລາ 2015 ຫາ ຕຸລາ 2020.

ອີງຕາມ ເອກະສານບົດບັນທຶກການປຶກສາຫາລື (R/D) ສະບັບປັບປຸງ, ໂຄງການແມ່ນຕົກລົງເຫັນດີ ສະໜັບສະໜູນການສ້າງຄວາມເຂັ້ມແຂງ ສຳລັບການຄຸ້ມຄອງປ່າໄມ້ແບບຍືນນານ ໃຫ້ແກ່ໜ່ວຍງານ ແລະ ວິຊາການ ທີ່ຮັບຜິດຊອບວຽກງານ REDD+ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍຜັນເອົາວຽກງານ REDD+ ເຂົ້າໃນຍຸດທະສາດຂອງຂະແໜງການ ຄຽງຄູ່ກັບ

ການປັບປຸງຂໍ້ມູນຂ່າວສານທາງດ້ານຊັບພະຍາກອນປ່າໄມ້.

**5. ເປົ້າໝາຍລວມ ແລະ ຈຸດປະສົງ ຂອງໂຄງການ**

ເປົ້າໝາຍລວມ:

ການຄຸ້ມຄອງປ່າໄມ້ແບບຍືນນານ ໄດ້ຮັບການຊຸກຍູ້ສົ່ງເສີມໂດຍການຈັດຕັ້ງປະຕິບັດວຽກງານ REDD+ ຢ່າງເຕັມຮູບແບບ.

ຈຸດປະສົງຂອງໂຄງການ:

ສະໜັບສະໜູນການສ້າງຄວາມເຂັ້ມແຂງ ສໍາລັບການຄຸ້ມຄອງປ່າໄມ້ແບບຍືນນານ ໃຫ້ແກ່ໜ່ວຍງານ ແລະ ວິຊາການ ທີ່ຮັບຜິດຊອບວຽກງານ REDD+ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍຜັນເອົາວຽກງານ REDD+ ເຂົ້າໃນຍຸດທະສາດຂອງຂະແໜງ ການ ຄຽງຄູ່ກັບການປັບປຸງຂໍ້ມູນຂ່າວສານທາງດ້ານຊັບພະຍາກອນປ່າໄມ້.

**6. ພາກສ່ວນຈັດຕັ້ງປະຕິບັດໂຄງການ**

ໃນເບື້ອງຕົ້ນ ແມ່ນ ກະຊວງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ກົມຄຸ້ມຄອງຊັບພະຍາກອນປ່າໄມ້ (MONRE-DFRM), ແລະ ພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫຼວງພະບາງ.

ພາຍຫຼັງມີການປັບປຸງໂຄງຮ່າງການຈັດຕັ້ງຂອງລັດຖະບານ ພາກສ່ວນຈັດຕັ້ງປະຕິບັດແມ່ນປ່ຽນມາເປັນ ກະຊວງ ກະສິກໍາ ແລະ ປ່າໄມ້, ກົມປ່າໄມ້ (MAF-DOF), ແລະ ພະແນກ ກະສິກໍາ ແລະ ປ່າໄມ້ ແຂວງຫຼວງພະບາງ.

# II. ຜົນການຈັດຕັ້ງປະຈິບັດໂຄງການ

**1. ການປະກອບສ່ວນຂອງໂຄງການ**

**1-1 ການປະກອບສ່ວນຈາກຝ່າຍລັດຖະບານຍີ່ປຸ່ນ**

1-1-1 ຊ່ຽວຊານຄົນຍີ່ປຸ່ນ

ຊ່ຽວຊານຈໍານວນ 9 ທ່ານ ແມ່ນໄດ້ມາເຮັດວຽກ ຢູ່ໃນ ສປປ ລາວ, ເຊິ່ງໄລຍະການເຮັດວຽກ ແມ່ນລວມມີທັງໝົດ 56.21 ເດືອນ.

1-1-2 ການຝຶກອົບຮົມໃຫ້ແກ່ຄູ່ຮ່ວມງານ

ໂຄງການໄດ້ສະໜັບສະໜູນການຝຶກອົບຮົມ ທັງໃນ ສປປ ລາວ, ປະເທດຍີ່ປຸ່ນ ແລະ ປະເທດທີ່ສາມ, ເພື່ອເພີ່ມທະວີຄວາມອາດສາມາດ ໃຫ້ແກ່ຄູ່ຮ່ວມງານ (C/P) ດັ່ງທີ່ສະຫຼຸບໄວ້ ໃນຕາຕະລາງ ທີ 1 ຂ້າງລຸ່ມນີ້:

**ຕາຕະລາງ ທີ 1: ການຝຶກອົບຮົມ**

| ລ/ດ | ການຝຶກອົບຮົມ | ຈໍານວນຄັ້ງ | ຈໍານວນຜູ້ເຂົ້າຮ່ວມ | ຈັດໂດຍ |
|---|---|---|---|---|
| 1 | ການຝຶກອົບຮົມ ໃນ ສປປ ລາວ | 2 | 50 | JICA, FCPF RP, CliPAD, SNV, SUFORD-SU |
| 2 | ການຝຶກອົບຮົມ ໃນປະເທດຍີ່ປຸ່ນ | 2 | 10 | JICA |
| 3 | ການຝຶກອົບຮົມເປັນກຸ່ມ ຂອງ JICA | 4 | 7 | JICA |
| 4 | ການຝຶກອົບຮົມໃນປະເທດທີ່ 3 (ປະເທດໄທ) | 4 | 7 | ແຜນງານຮ່ວມມື JICA-RECOFTC, ການຮ່ວມມື UN-REDD/FCPF/REDD+ |
| ລວມ | | 12 | 74 | |

1-1-3 ການໃຊ້ຈ່າຍພາຍໃນ

ການໃຊ້ຈ່າຍສໍາລັບການດໍາເນີນງານຢູ່ພາຍໃນ ແລະ ສັນຍາຍ່ອຍ ໃນການຈັດຕັ້ງປະຕິບັດໂຄງການໃນໄລຍະທີ 1 ແມ່ນໄດ້ສະຫຼຸບໄວ້ໃນຕາຕະລາງດັ່ງລຸ່ມນີ້: (ນີ້ແມ່ນມູນຄ່າທີ່ສະຫຼຸບຈົນຮອດເດືອນ ພະຈິກ 2017)

**ຕາຕະລາງ ທີ 2: ການໃຊ້ຈ່າຍ ຈາກ JICA**

| ລາຍການ | 2015 | 2016 | 2017 | ລວມ |
|---|---|---|---|---|
| ການໃຊ້ຈ່າຍສຳລັບການດຳເນີນງານຢູ່ພາຍໃນ | 4,311,546 | 26,431,464 | 29,611,930 | 60,354,940 |
| ສັນຍາຍ່ອຍ | 0 | 23,917,159 | 20,469,313 | 44,386,472 |
| **ລວມ** | 4,311,546 | **50,348,623** | **50,081,243** | **104,741,412** |

1-1-4 ການຈັດຊື້ ຈັດຈ້າງ ອຸປະກອນ

ໄດ້ຈັດຊື້ ອຸປະກອນຫ້ອງການ (ຄອມພິວເຕີ, ປຣິນເຕີສີ, ຊຸດຫູຟັງແປພາສາ), ເຄື່ອງໃຊ້ໄຟຟ້າຫ້ອງການ (ແອ), ແລະ ລົດຈັກ. ສິ່ງເຫຼົ່ານີ້ ແມ່ນຈະໄດ້ມອບໃຫ້ ລັດຖະບານ ສປປ ລາວ ຫຼັງຈາກໂຄງການສິ້ນສຸດ.

**1-2 ການປະກອບສ່ວນຈາກຝ່າຍລາວ**

1-2-1 ການແຕ່ງຕັ້ງຄູ່ຮ່ວມງານ (C/P)

ໃນເດືອນ ກຸມພາ 2016 ໄດ້ແຕ່ງຕັ້ງ ພະນັກງານຈຳນວນ 8 ທ່ານ ຈາກຄູ່ຮ່ວມງານ ເຊິ່ງລວມມີ ຫົວໜ້າໂຄງການ 1 ທ່ານ, ຜູ້ບໍລິຫານໂຄງການ 2 ທ່ານ, ແລະ ຜູ້ບໍລິຫານ 1-2 ທ່ານ ຂອງແຕ່ລະຜົນໄດ້ຮັບ. ພາຍຫຼັງ ມີການປັບປຸງໂຄງຮ່າງການຈັດຕັ້ງ ຂອງຂະແໜງການປ່າໄມ້ (ຂໍ້ຕົກລົງນາຍົກລັດຖະມົນຕີສະບັບເລກທີ 57, ເດືອນ ກໍລະກົດ 2016, ຄຳສັ່ງນາຍົກລັດຖະມົນຕີສະບັບເລກທີ 99, ເດືອນ ມີນາ 2017), ການແຕ່ງຕັ້ງຄູ່ຮ່ວມງານໃໝ່ຢ່າງເປັນທາງການ ແມ່ນຍັງບໍ່ທັນສຳເລັດເທື່ອ.

1-2-2 ຫ້ອງເຮັດວຽກຂອງໂຄງການ

ຫ້ອງການຫຼັກຂອງໂຄງການແມ່ນ ຕັ້ງຢູ່ ກົມປ່າໄມ້, ຫ້ອງການທີ່ເຮັດວຽກຮູບພາບດາວທຽມ ແມ່ນຕັ້ງຢູ່ ກອງສຳຫຼວດ ແລະ ວາງແຜນປ່າໄມ້, ແລະ ຫ້ອງການໂຄງການປະຈຳແຂວງ ແມ່ນຕັ້ງຢູ່ ພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ. (ໝາຍເຫດ: ໃນເບື້ອງຕົ້ນ ຫ້ອງການຂອງໂຄງການປະຈຳແຂວງ ແມ່ນຕັ້ງຢູ່ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ, ກ່ອນຈະຍ້າຍມາຢູ່ ພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ ພາຍຫຼັງມີການປັບປຸງໂຄງຮ່າງການຈັດຕັ້ງໃໝ່.

1-2-3 ການໃຊ້ຈ່າຍສຳລັບການດຳເນີນງານຢູ່ພາຍໃນ

US$80,000 (ປະມານ ¥8,769, 287) ແມ່ນມູນຄ່າສະໜັບສະໜູນຮ່ວມສຳລັບວຽກງານ ສຳຫຼວດປ່າໄມ້ແຫ່ງຊາດຄັ້ງທີ 2, ແລະ ຈຳນວນ 769,000,000 ກີບ (ປະມານ ¥9,600,000) ແມ່ນມູນຄ່າການໃຊ້ຈ່າຍອື່ນໆ ທີ່ສະໜັບສະໜູນຈາກຝ່າຍລາວ.

**2. ກິດຈະກຳ, ຜົນໄດ້ຮັບ ແລະ ຜົນສຳເລັດ**

**2-1 ຜົນໄດ້ຮັບ ແລະ ຕົວຊີ້ວັດ (ຄາດໝາຍທີ່ຢາກບັນລຸ ແລະ ຄາດໝາຍທີ່ສາມາດບັນລຸໄດ້ ໃນໄລຍະສິ້ນສຸດໂຄງການ)**

**(1) ຜົນໄດ້ຮັບ ທີ 1**

| | |
|---|---|
| ຜົນໄດ້ຮັບ | ສ້າງຄວາມອາດສາມາດໃຫ້ແກ່ອົງການຈັດຕັ້ງລະດັບສູນກາງໃນການພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ການປະສານງານຂອງຂະແໜງການ |
| ຕົວຊີ້ວັດ | ຍຸດທະສາດ ປີ 2020 ສະບັບປັບປຸງ ໄດ້ຮັບການຮັບຮອງ. |
| ວິທີການຢັ້ງຢືນຕົວຊີ້ວັດ | ເອກະສານ ໄດ້ຖືກຮັບຮອງ |
| ສະຫຼຸບຄວາມຄືບໜ້າ | ໂດຍລວມແລ້ວ ກິດຈະກຳ ຕ່າງໆ ແມ່ນມີຄວາມຄືບໜ້າເປັນລຳດັບ ເຖິງແມ່ນວ່າ ຈະມີຄວາມລ່າຊ້າໃນຫຼາຍໆກິດຈະກຳ. |

**ກິດຈະກຳ 1-1 ສະໜັບສະໜູນການພັດທະນາບັນດານິຕິກຳ ແລະ ນະໂຍບາຍທີ່ກ່ຽວຂ້ອງ**

ຕາມການຕົກລົງເຫັນດີ, ການທົບທວນຄືນຍຸດທະສາດປ່າໄມ້ ຮອດປີ 2020 ແມ່ນຈະເລີ່ມດຳເນີນການ ພາຍຫຼັງກົດໝາຍປ່າໄມ້ສະບັບປັບປຸງ ສຳເລັດແລ້ວ (ຈະໄດ້ສົ່ງ ກົດໝາຍປ່າໄມ້ ສະບັບປັບປຸງ ໃຫ້ສະພາແຫ່ງຊາດ ຕາມແຜນທີ່ວາງໄວ້ ໃນເດືອນ ຕຸລາ 2018). ການກະກຽມຍຸດທະສາດ ເຣດ+ ແຫ່ງຊາດ ແມ່ນມີຄວາມຄືບໜ້າພໍສົມຄວນ ເຊິ່ງຄາດວ່າຈະສຳເລັດໃນທ້າຍປີ 2017 ນີ້. ກ່ຽວພັນກັບ ການທົບທວນຄືນຍຸດທະສາດປ່າໄມ້ ຮອດປີ 2020, ທີມງານຂອງໂຄງການ ແມ່ນໄດ້ເກັບກຳຂໍ້ມູນທີ່ກ່ຽວຂ້ອງ ໂດຍການສັງລວມ ຍຸດທະສາດຂະແໜງການປ່າໄມ້ ໃນປະຈຸບັນ ແລະ ຂອງຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ການກະສິກຳ ແລະ ພັດທະນາຊົນນະບົດ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແລະ ຜ່ານການເຂົ້າຮ່ວມ ປຶກສາຫາລືໃນຫຼາຍໆກອງປະຊຸມ.

ໄດ້ສະໜອງຄວາມຮູ້ດ້ານວິຊາການ ໃນນະໂຍບາຍຕ່າງໆທີ່ສຳຄັນເຊັ່ນ: ການທົບທວນຄືນກົດໝາຍປ່າໄມ້ ໂດຍອີງໃສ່ການສຳຫຼວດຂະແໜງການປ່າໄມ້ ໃນຕົ້ນປີ 2017 ທີ່ຜ່ານມາ; ການທົບທວນຄືນ 3 ປະເພດປ່າໄມ້; ບັນຫາທີ່ກ່ຽວພັນກັບປ່າໄມ້ບ້ານ ເຊັ່ນ ສິດການນຳໃຊ້ປ່າ, ການຄອບຄອງທີ່ດິນ ແລະ ອື່ນໆ. ການສະໜັບສະໜູນດັ່ງກ່າວ ແມ່ນຈັດຕັ້ງປະຕິບັດຜ່ານ ການປະສານງານໂຄງການອື່ນ ແລະ ຄູ່ຮ່ວມພັດທະນາ ລວມມີ ໂຄງການ ProFLEGT, FCPF Readiness Project, ແລະ ທະນາຄານໂລກ.

**ກິດຈະກຳ 1-2 ຈັດກອງປະຊຸມສ້າງຄວາມອາດສາມາດສຳລັບວຽກງານວິຊາການເປົ້າໝາຍ (ເຊັ່ນ: ການຈ່າຍຄ່າບໍລິການທາງດ້ານສິ່ງແວດລ້ອມ, ລະບົບການຕິດຕາມກວດກາປ່າໄມ້ແຫ່ງຊາດ ແລະ ເຣດ+)**

ດັ່ງທີ່ໄດ້ສະເໜີໃນຕາຕະລາງທີ 1, ພະນັກງານທັງໝົດ 74 ທ່ານ ແມ່ນໄດ້ເຂົ້າຮ່ວມການຝຶກອົບຮົມຕ່າງໆ. ສະມາຊິກຂອງທັງ 6 ກຸ່ມ TWGs ຂອງວຽກງານເຣດ+ ກໍ່ໄດ້ເຂົ້າຮ່ວມກອງປະຊຸມວິຊາການໃນຫຼາຍໆຄັ້ງ. ການຝຶກອົບຮົມດັ່ງກ່າວ ແມ່ນຈັດຂຶ້ນ ໂດຍການຮ່ວມມືກັບ ຄູ່ຮ່ວມພັດທະນາ ແລະ ໂຄງການ ອື່ນໆ ເຊັ່ນ: ໂຄງການ FCPF RP, CliPAD, SNV, SUFORD-SU). ເຖິງແມ່ນວ່າຈະບໍ່ໄດ້ລະບຸຢູ່ໃນ ຕົວຊີ້ວັດກິດຈະກຳ, ຫຼາຍໆການຝຶກອົບຮົມ ແລະ ການສຳມະນາ ແມ່ນໄດ້ຈັດຂຶ້ນໃຫ້ສະເພາະ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແລະ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ. ນອກນັ້ນ ຍັງມີຄູ່ຮ່ວມງານຫຼາຍໆ ທ່ານ ໄດ້ຮັບການສະໜັບສະໜູນ ໃນການເຂົ້າຮ່ວມ ຝຶກອົບຮົມ ແລະ ສຳມະນາ ໃນຕ່າງປະເທດ ເຊິ່ງຈັດຂຶ້ນໂດຍ ພາກສ່ວນອື່ນ ເຊັ່ນ UN-REDD/FCPF/REDD+, RECOFTC, ກະຊວງສິ່ງແວດລ້ອມ ປະເທດຍີ່ປຸ່ນ.

**ກິດຈະກຳ 1-3 ສະໜັບສະໜູນການປະສານງານຂອງຂະແໜງການ**

ໂຄງການ ແມ່ນສະໜັບສະໜູນ ກອງເລຂາຂອງ FSSWG ໃນການປັບປຸງ TOR, ແລະ ຈັດກອງປະຊຸມ FSSWG, ຕາມແຜນການ ແມ່ນທຸກໆ 3 ເດືອນ. ໃນຊ່ວງໄລຍະທີ 1 ຂອງໂຄງການ, ກອງປະຊຸມ FSSWG ແມ່ນໄດ້ຈັດຂຶ້ນທັງໝົດ 3 ຄັ້ງ (ວັນທີ 12 ມີນາ 2016, 24 ມີນາ 2017, ແລະ 30 ສິງຫາ 2017), ແຕ່ວ່າບໍ່ສາມາດຈັດຂຶ້ນທຸກໆ 3 ເດືອນ ຕາມທີ່ກຳນົດໄວ້ໃນເບື້ອງຕົ້ນ. ຕັ້ງແຕ່ເດືອນ ເມສາ 2016 ເປັນຕົ້ນມາ, ໄດ້ມີການປັບປຸງໂຄງຮ່າງການຈັດຕັ້ງຂອງຂະແໜງການປ່າໄມ້ ເຊິ່ງໃຊ້ເວລາດົນພໍສົມຄວນ ສະນັ້ນ ຈິ່ງເຮັດໃຫ້ກອງປະຊຸມ ຄັ້ງທີ 1 ແລະ 2 ມີໄລຍະຫ່າງກັນ ເຖິງ 1 ປີ. ພ້ອມດຽວກັນນັ້ນ, ການຈັດຫາມື້ ທີ່ແທດເໝາະກັບຕາຕະລາງວຽກຂອງທັງທ່ານປະທານ ແລະ ປະທານຮ່ວມ (ຈາກ ອົງການໄຈກາ) ແມ່ນມີຄວາມຫຍຸ້ງຍາກພໍສົມຄວນ ເຮັດໃຫ້ບໍ່ສາມາດຈັດກອງປະຊຸມໄດ້ ທຸກໆ 3 ເດືອນ.

ໂຄງການ ຍັງໄດ້ໃຫ້ຄວາມສະດວກໃນການເຊື່ອມໂຍງ FSSWG ແລະ SWG-ARD (FSSWG ແມ່ນກຸ່ມຂະແໜງການຍ່ອຍພາຍໃຕ້ SWG-ARD), ໄດ້ລາຍງານ ວຽກງານຂອງຂະແໜງການປ່າໄມ້ ໃນກອງປະຊຸມຈັດຕັ້ງປະຕິບັດໂຕະມົນ ໃນປີ 2016 (RTIM), ຕົວຊີ້ວັດເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ອື່ນໆ.

**ບັນຫາ ແລະ ສິ່ງທ້າທາຍ**

- ການຕິດຕາມຄວາມຄືບໜ້າ ຂອງການທົບທວນຄືນກົດໝາຍປ່າໄມ້ ແມ່ນມີຄວາມສຳຄັນຫຼາຍ ໃນການທີ່ຈະໃຫ້ການສະໜູນດ້ານວິຊາການ ຢ່າງພຽງພໍ. ຂະບວນການທົບທວນຄືນກົດໝາຍປ່າໄມ້ ແມ່ນດຳເນີນເປັນພາສາລາວ ສະນັ້ນ ຕ້ອງໄດ້ມີການປຶກສາຫາລື ແລະ ຕົກລົງເຫັນດີ ລ່ວງໜ້າ ກັບຝ່າຍລັດຖະບານລາວ ໃນການແປກົດໝາຍດັ່ງກ່າວ ເປັນພາສາອັງກິດ, ແລະ ຈັດກອງປະຊຸມປຶກສາຫາລື ໃນຊ່ວງໄລຍະເວລາທີ່ວຽກດັ່ງກ່າວ ມີຄວາມຄືບໜ້າ ໃນແຕ່ລະລຳດັບ.

- ວຽກງານປັບປຸງ ຍຸດທະສາດປ່າໄມ້ ຮອດປີ 2020 ຈະເລີ່ມຂຶ້ນຫຼັງຈາກກົດໝາຍປ່າໄມ້ສະບັບປັບປຸງ ສຳເລັດແລ້ວ. ແຕ່ວ່າມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ເລີ່ມຕົ້ນກະກຽມຂະບວນການທີ່ຈະຈັດຕັ້ງປະຕິບັດການທົບທວນຄືນ ເພື່ອໃຫ້ວຽກງານດຳເນີນສະດວກ, ມີການກະກຽມແຜນວຽກ, ແລະ ການປະກອບສ່ວນອື່ນໆ ໂດຍຜ່ານການຮ່ວມມືກັບຄູ່ຮ່ວມພັດທະນາອື່ນໆ.

- ການວາງແຜນ ແລະ ຈັດຕັ້ງປະຕິບັດການຝຶກອົບຮົມ ຕາມຄວາມຕ້ອງການຂອງໜ່ວຍງານທີ່ກ່ຽວຂ້ອງ, ແລະ ການປະສານງານ ກັບໂຄງການ ແລະ ຄູ່ຮ່ວມງານອື່ນໆ ແມ່ນມີຄວາມສຳຄັນຫຼາຍ.

- ການຈັດຕັ້ງປະຕິບັດໂຄງການໃນໄລຍະທີ 1 ນີ້ ແມ່ນພົບຄວາມຫຍຸ້ງຍາກ ໃນບາງດ້ານ ເຊັ່ນ ການປະສານງານຈັດກອງປະຊຸມ FSSWG ເຊິ່ງຕ້ອງອີງຕາມຕາຕະລາງວຽກຂອງທັງ 2 ປະທານ ແລະ ອື່ນໆ. ເນື່ອງຈາກ TOR ຂອງກຸ່ມ FSSWG ກຳນົດວ່າກອງປະຊຸມຕ້ອງຈັດຂຶ້ນທຸກໆ 3 ເດືອນ ສະນັ້ນ ກອງເລຂາ ແລະ ປະທານ ແມ່ນຕ້ອງໄດ້ໃຫ້ບຸລິມະສິດ ໃນການຈັດກອງປະຊຸມດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້. ພ້ອມດຽວກັນນັ້ນ, ວາລະຂອງກອງປະຊຸມ FSSWG ສ່ວນຫຼາຍແມ່ນມີເວລາຈຳກັດ ໃນການນຳສະເໜີບົດຕ່າງໆ ແລະ ປຶກສາຫາລື ໃນຫຼາຍໆບັນຫາທີ່ກ່ຽວພັນກັບຂະແໜງການປ່າໄມ້; ສະນັ້ນ ຄວນພິຈາລະນາ ຈັດກອງປະຊຸມຍ່ອຍ ສຳລັບບັນຫາສະເພາະທີ່ສຳຄັນ.

**(2) ຜົນໄດ້ຮັບທີ 2**

| | |
|---|---|
| ຜົນໄດ້ຮັບ | ການຫລຸດຜ່ອນການປ່ອຍ ແລະ ການກຳຈັດທາດອາຍພິດເຮືອນແກ້ວແມ່ນເປັນຜົນມາຈາກການຈັດຕັ້ງປະຕິບັດກິດຈະກຳເຣດ+ ຊຶ່ງໄດ້ຄຳນວນໃນລະດັບຊາດ ໂດຍການນຳໃຊ້ລະບົບການຕິດຕາມກວດກາປ່າໄມ້ແຫ່ງຊາດ |
| ຕົວຊີ້ວັດ | ການດຳເນີນງານຂອງລະບົບ NFMS ແມ່ນສອດຄ່ອງ ແລະ ເປັນໄປຕາມຂໍ້ກຳນົດຂອງ UNFCCC. |
| ວິທີການຢັ້ງຢືນຕົວຊີ້ວັດ | ເອກະສານກ່ຽວກັບແຜນດຳເນີນງານຂອງລະບົບ NFMS ແມ່ນໄດ້ຮັບການອະນຸມັດ |
| ສະຫຼຸບຄວາມຄືບໜ້າ | ແຕ່ລະກິດຈະກຳແມ່ນໄດ້ຈັດຕັ້ງປະຕິບັດຕາມແຜນໂດຍບໍ່ມີການປ່ຽນແປງ ແລະ ໄດ້ມີການກຳນົດຜົນໄດ້ຮັບ. ເຖິງຢ່າງໃດກໍ່ຕາມ ກິດຈະກຳ 2-2 (ສະໜັບສະໜູນວຽກງານ MRV) ແມ່ນຈະໄດ້ສືບຕໍ່ຈັດຕັ້ງປະຕິບັດໃນໄລຍະທີ 2 ຂອງໂຄງການ, ດັ່ງນັ້ນກິດຈະກຳກ່ຽວກັບວຽກງານດັ່ງກ່າວຍັງບໍ່ທັນໄດ້ລິເລີ່ມຈັດຕັ້ງປະຕິບັດ |

**ກິດຈະກຳທີ 2-1 ສະໜັບສະໜູນການພັດທະນາລະບົບຕິດຕາມກວດກາປ່າໄມ້ແຫ່ງຊາດ (NFMS)**

ໃນໄລຍະເລີ່ມຕົ້ນການສ້າງລະບົບ NFMS ທາງໂຄງການໄດ້ມີການປຶກສາຫາລືຫຼາຍຄັ້ງກ່ຽວກັບກອບຂອງການພັດທະນາ ແລະ ແຜນ ກັບພາກສ່ວນທີ່ກ່ຽວຂ້ອງໂດຍສະເພາະພາຍໃນກົມປ່າໄມ້, ທີມງານວິຊາການ REL/MRV TWG ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ, ເຊິ່ງໄດ້ຕົກລົງເຫັນດີທີ່ຈະພັດທະນາຟັງຊັ່ນການວັດແທກຂອງ MRV ແລະ ເພື່ອລວບລວມເອົາຂໍ້ມູນ. ໄດ້ມີການຕົກລົງເຫັນດີວ່າຖານຂໍ້ມູນຂອງ NFMS ແມ່ນຈະໄດ້ຮັບການພັດທະນາໃນໄລຍະທີ1 ເຊິ່ງປະກອບມີຟັງຊັ່ນດັ່ງຕໍ່ໄປນີ້:

- ລວບລວມ/ຄິດໄລ່/ຜົນໄດ້ຮັບຂອງຂໍ້ມູນກິດຈະກຳ
- ລວບລວມ/ຄິດໄລ່/ຜົນໄດ້ຮັບຂອງປັດໃຈການປ່ອຍທາດອາຍພິດ
- ຄິດໄລ່/ປະເມີນ/ ຜົນໄດ້ຮັບຂອງການປ່ອຍທາດອາຍ ກາກບອນ

ກ່ຽວກັບການຈັດຕັ້ງສະຖາບັນທີ່ຮັບຜິດຊອບ, ໄດ້ມີການຕົກລົງເຫັນດີວ່າ ຜູ້ຮັບຜິດຊອບ, ເບິ່ງແຍງລະບົບແມ່ນມອບໃຫ້ ຫນ່ວຍງານຖານຂໍ້ມູນຂອງ ກອງສຳຫຼວດ ແລະ ວາງແຜນປ່າໄມ້. ເຊິ່ງທີມງານຖານຂໍ້ມູນກໍ່ໄດ້ເຂົ້າຮ່ວມການຝຶກອົບຮົມ 2 ອາທິດກ່ຽວກັບການຄຸ້ມຄອງຖານຂໍ້ມູນ ແລະ ການບຳລຸງຮັກສາເຄື່ອງ ໃນເດືອນ ພະຈິກປີ 2017 ທີ່ຜ່ານມາ.
ການສ້າງໂຄງຮ່າງຂອງລະບົບ NFMS (ລະບົບຖານຂໍ້ມູນ) ທີ່ວາງແຜນໄວ້ໃນໄລຍະທີ 1 ໄດ້ສຳເລັດ ແລະ ຕິດຕັ້ງໄວ້ໃນເຊີເວີ້ ຂອງ ກອງສຳຫຼວດ ແລະ ວາງແຜນປ່າໄມ້, ເຊິ່ງພະນັກງານຂອງ ກົມປ່າໄມ້ ສາມາດນຳໃຊ້ຂໍ້ມູນຜ່ານລະບົບເຄືອຄ່າຍອິນເຕີເນັດໄດ້.

**ກິດຈະກຳ 2-2 ສະຫນັບສະໜູນການຈັດຕັ້ງປະຕິບັດວຽກງານດ້ານການວັດແທກ, ການລາຍງານ ແລະ ພິສູດຢັ້ງຢືນ ແຫ່ງຊາດຄັ້ງທຳອິດ (MRV) ຂອງ REDD+ ໂດຍນຳໃຊ້ລະບົບ NFMS**

ກິດຈະກຳດັ່ງກ່າວນີ້ແມ່ນມີແຜນຈະຈັດຕັ້ງປະຕິບັດໃນໄລຍະທີ 2 ຂອງໂຄງການ, ດັ່ງນັ້ນຜົນຂອງກິດຈະກຳດັ່ງກ່າວ ແມ່ນບໍ່ມີໃນໄລຍະທີ 1 ຂອງໂຄງການ.

**ກິດຈະກຳ 2-3 ສະຫນັບສະໜູນການສ້າງເສັ້ນລະດັບການປ່ອຍທາດອາຍພິດທຽບຖານ (FREL/FRL)**

ອີງຕາມຕາຕະລາງແຜນວຽກ ບົດລາຍງານທັງສອງບົດຄື: ບົດລາຍງານ FREL/FRL ທີ່ຈະສົ່ງໃຫ້ UNFCCC ແລະ ເອກະສານໂຄງການຫຼຸດຜ່ອນການປ່ອຍທາດອາຍພິດ (ERPD) ທີ່ຈະສົ່ງໃຫ້ ກອງທຶນກາກບອນ FCPF ລວມທັງ FREL/FRL ແລະ ເອກະສານອື່ນໆແມ່ນຈະໄດ້ສົ່ງໃນເດືອນມັງກອນ 2018, ເຊິ່ງວຽກງານຮ່າງສອງເອກະສານ FREL/FRLs ດັ່ງກ່າວນີ້ແມ່ນໄດ້ຈັດຕັ້ງປະຕິບັດຄ່ຽງຄູ່ກັນໄປ ໃນໄລຍະທີ1 ຂອງໂຄງການ.

ແຜນການ ແລະ ຂັ້ນຕອນສຳລັບການພັດທະນາ FREL / FRL ແມ່ນໄດ້ລາຍງານ, ປຶກສາຫາລື ແລະ ຮັບຮອງເອົາໃນກອງປະຊຸມວິຊາການ REL / MRV TWG. ຈາກການສະຫນັບສະຫນູນຂອງໂຄງການ, ກອງສຳຫຼວດ ແລະ ວາງແຜນປ່າໄມ້ ໄດ້ສ້າງຕັ້ງທີມງານຮ່າງ REL (ໃນວັນທີ 10 ພະຈິກ 2016, ຂໍ້ຕົກລົງ ຂອງກອງສຳຫຼວດ ແລະ ວາງແຜນປ່າໄມ້ ສະບັບເລກທີ 271 / FIPD) ແຕ່ງຕັ້ງຫົວໜ້າກອງສຳຫຼວດ ແລະ ວາງແຜນປ່າໄມ້ ເປັນຜູ້ນຳທີມ ແລະ ເຮັດວຽກເປັນສູນກາງໃນການພັດທະນາ FREL / FRL. ການພັດທະນາ FREL / FRL ໄດ້ດຳເນີນຕາມຂັ້ນຕອນດັ່ງຕໍ່ໄປນີ້:

**ການວິເຄາະສາເຫດ, ພັດທະນານະໂຍບາຍ ແລະ ມາດຕະການ (PaMs)** ໄດ້ຈັດຕັ້ງປະຕິບັດດ້ວຍການປະສົມປະສານຂອງ 1) ການວິເຄາະການປ່ຽນແປງການນຳໃຊ້ທີ່ດິນໂດຍອີງໃສ່ແຜນທີ່ປະເພດປ່າໄມ້ (FTMs) ປີ 2000/2005/2010/2010/2015 (ເບິ່ງຕາຕະລາງ 3); 2) ການປະເມີນການປ່ອຍທາດອາຍພິດຈາກການເຊື່ອມໂຊມຂອງປ່າໄມ້ຈາກການເລືອກຂຸດຄົ້ນໄມ້ (ເບິ່ງກິດຈະກຳ 2.4); ແລະ 3) ການກຳນົດເຂດຈຸດສຸມຂອງການທຳລາຍປ່າໄມ້ໂດຍນຳໃຊ້ຂໍ້ມູນການປ່ຽນແປງຂອງປ່າໄມ້ທົ່ວໂລກປີ 2000-2015, ໂດຍການຮ່ວມມືກັບທາງທີມງານໂຄງການ ແລະ ໂຄງການກຽມຄວາມພ້ອມຂອງ (FCPF Readiness Project).

### ຕາຕະລາງທີ 3: ການປ່ຽນແປງຂອງ ທີ່ດິນ/ປ່າໄມ້ ປີ 2005-2015

| | 2015 | Change from | Current Forest | | Regenerating Vegetation | Crop Land | | Water | Other Vegetated area | Other land | Total |
|---|---|---|---|---|---|---|---|---|---|---|---|
| 2005 | ha | 2005 to 2015 | 1) Natural Forest | 2) Forest Plantation | | 1) Upland Crop | 2) Permanent Agriculture land | | | | |
| Current Forest | 1) Natural Forest | − 620,101 | 13,135,621 | 57,555 | 397,010 | 54,198 | 163,530 | 34,871 | 263 | 8,496 | 13,851,544 |
| | 2) Forest Plantation | + 114,085 | 0 | 22,721 | 417 | 15 | 718 | 1 | 0 | 8 | 23,880 |
| Regenerating Vegetation | | + 2,991 | 95,058 | 42,912 | 5,508,968 | 80,236 | 397,345 | 26,771 | 128 | 8,070 | 6,159,489 |
| Crop Land | 1) Upland Crop | − 57,745 | 742 | 29 | 197,121 | 5,557 | 3,546 | 241 | 873 | 155 | 208,264 |
| | 2) Permanent Agriculture land | + 485,118 | 21 | 9,632 | 56,835 | 9,669 | 1,761,524 | 3,762 | 28 | 9,189 | 1,850,659 |
| Water | | + 71,412 | 0 | 0 | 0 | 0 | 372 | 278,372 | 0 | 148 | 278,892 |
| Other Vegetated area | | − 20,726 | 0 | 5,099 | 1,500 | 695 | 8,110 | 5,966 | 391,387 | 655 | 413,411 |
| Other land | | + 24,967 | 0 | 17 | 630 | 148 | 632 | 320 | 6 | 266,363 | 268,117 |
| Total | | + 0 | 13,231,443 | 137,965 | 6,162,480 | 150,519 | 2,335,778 | 350,304 | 392,685 | 293,084 | 23,054,258 |

ສາເຫດຫຼັກຂອງການທຳລາຍປ່າໄມ້ໃນທົ່ວປະເທດແມ່ນການຫັນປ່ຽນພື້ນທີ່ປ່າໄມ້ໄປສູ່ພື້ນທີດິນກະສິກຳ ແລະ ອ່າງໂຕ່ງຂອງເຂື່ອນໄຟຟ້າ, ສາເຫດຫຼັກຂອງການເຮັດໃຫ້ປ່າໄມ້ເຊື່ອມໂຊມແມ່ນການຫັນປ່ຽນພື້ນທີ່ປ່າໄມ້ໄປສູ່ ປ່າເຫຼົ່າ (RV), ປ່າປູກ ແລະ ການຖາງ ແລະ ຈູດປ່າ ເພື່ອທຳການຜະລິດ ແລະ ການຂຸດຄົ້ນໄມ້. ຜົນພວງດັ່ງກ່າວນີ້ແມ່ນໄດ້ເປັນຂໍ້ມູນອ້າງອີງພື້ນຖານໃນການພັດທະນາຍຸດທະສາດເຣດ+ (NRS) ແຫ່ງຊາດ, ສາລັບກອງທຶນກາກບອນ FCPF ແລະ ວຽກງານ REDD+ ຂັ້ນແຂວງລວມທັງແຜນຈັດຕັ້ງປະຕິບັດ (PRAPs) ເພື່ອພິຈາລະນາກ່ຽວກັບ PaMs.

ການປ່ອຍທາດອາຍພິດຈາກການເຊື່ອມໂຊມຂອງປ່າໄມ້ຈາກການເລືອກຂຸດຄົ້ນໄມ້ປະເມີນສະເລ່ຍແມ່ນເກືອບຮອດ 30% ຂອງການປ່ອຍທາດອາຍພິດທັງໝົດທີ່ກ່ຽວຂ້ອງກັບປ່າໄມ້. ຢ່າງໃດກໍຕາມການປະເມີນໃນຄັ້ງນີ້ແມ່ນອີງໃສ່ຂໍ້ມູນສະເລ່ຍອາດຈະມີຄວາມບໍ່ແນ່ນອນສູງ, ແຕ່ມັນກໍ່ໄດ້ສະແດງໃຫ້ເຫັນເຖິງການແຜ່ຂະຫຍາຍຂອງການຂຸດຄົ້ນໄມ້ໃນ ສ ປ ປ ລາວ.

**ຂໍ້ມູນກິດຈະກຳ** ສຳລັບ FREL/FREL ແລະ ERPD FREL/FRL ລະດັບຊາດ ແມ່ນໄດ້ຮັບການພັດທະນາຈາກແຜນທີ່ປະເພດປ່າໄມ້ ປີ 2000/2005/2010/2015. ແຜນທີປະເພດປ່າໄມ້ປີ 2010 (ເປັນແຜນທີພື້ນຖານ) ເຊິ່ງ 2005 ໄດ້ຮັບການປັບປຸງໂດຍນຳໃຊ້ຫຼາກຫຼາຍຂໍ້ມູນເຂົ້າຊ່ວຍເຊັ່ນ: ຜົນຈາກການສຳຫຼວດປ່າເຫຼົ່າ, ຂໍ້ມູນການປ່ຽນແປງຂອງປ່າໄມ້ທົ່ວໂລກປີ 2000-2015, ແລະ ອື່ນໆ. ຈາກນັ້ນໄດ້ມີການກະກຽມ ແລະ ໄດ້ພັດທະນາແຜນທີ່ປະເພດປ່າໄມ້ ປີ 2015 ໂດຍການນຳໃຊ້ວິທີແບບດຽວກັນ (ເຊັ່ນ ວິທີການກວດສອບຈາກພື້ນທີ່ມີການປ່ຽນແປງ) ທີໄດ້ນຳໃຊ້ໃນການພັດທະນາແຜນທີ່ປະເພດປ່າໄມ້ຂອງປີ 2005 ແລະ 2000 ທີ່ຈັດຕັ້ງປະຕິບັດໃນຊ່ວງໄລຍະຂອງໂຄງການ NFIS ໃນລະຫວ່າງສົກປີ (2013-2015). ຜ່ານຂັ້ນຕອນການຈັດຕັ້ງປະຕິບັດວຽກງານດັ່ງກ່າວນີ້ທາງໂຄງການໄດ້ຈັດຝຶກອົບຮົມໄລຍະສັ້ນໃນການຈັດຕັ້ງປະຕິບັດໜ້າວຽກຕົວຈິງໃຫ້ແກ່ໜ່ວຍງານຜູ້ດຳເນີນງານດ້ານ remote sensing.

ປັດໄຈຂອງ ການປ່ອຍ/ກຳຈັດທາດອາຍພິດ ແມ່ນໄດ້ຄິດໄລ່ຕາມແຕ່ລະປະເພດຂອງທີ່ດິນ ແລະ ປ່າໄມ້ ປະເພດ EF/MD/DD/CF/MCB/RV ໂດຍນຳໃຊ້ຂໍ້ມູນຂອງການສຳຫຼວດປ່າໄມ້ທົ່ວປະເທດຄັ້ງທີ 2 (ເບິ່ງກິດຈະກຳ 2-4). ເຊັ່ນດຽວກັນຄວາມບໍ່ແນ່ນອນໃນປັດໄຈຂອງ ການປ່ອຍ/ກຳຈັດທາດອາຍພິດ ແມ່ນໄດ້ຄິດໄລ່ຕາມກອບວິທີການທີ່ທາງ ກອງທຶນ FCPF CF ໄດ້ລະບຸ ແລະ ກຳນົດໄວ້.

**ສະຖານະການລະດັບຊາດຂອງ ສ ປ ປ ລາວ** ແມ່ນໄດ້ມີການຄົ້ນຄ້ວາ ແລະ ປຶກສາຫາລືວ່າຈະສາມາດດັດປັບເຂົ້າໃນບົດ FREL/FRLs ຫຼື ບໍ່. ການເພີ່ມຂຶ້ນຂອງປະຊາກອນ, ການກໍ່ສ້າງເຂື່ອນໄຟຟ້າ, ການຂຸດຄົ້ນບໍ່ແຮ່, ແລະ ການກໍ່ສ້າງເສັ້ນທາງລົດໄຟແຫ່ງຊາດ, ສິ່ງດັ່ງກ່າວນີ້ແມ່ນ ປັດໄຈສາຄັນຄວນຈະພິຈາລະນາ. ພາຍຫຼັງມີການຄົ້ນຄວ້າ ແລະ ວິເຄາະຂໍ້ມູນທີ່ມີຢູ່, ສາມາດສະຫຼຸບ ແລະ ສັງລວມໄດ້ວ່າປັດໄຈທີ່ກ່າວມານັ້ນມັນບໍ່ສົມເຫດສົມຜົນທີ່ຈະເອົາເຂົ້າໃນບົດລາຍງາຍ ແລະ ບໍ່ຖືວ່າເປັນສະຖານະການລະດັບຊາດຂອງ ສ ປ ປ ລາວ.

**ການປະເມີນການປ່ຽນແປງຂອງທາດກາກບອນ ແລະ ຜົນຂອງ ການປ່ອຍ/ກຳຈັດທາດອາຍພິດ ໃນແຕ່ລະໄລຍະເວລາທີ່ແຕກຕ່າງກັນ**, ການຈັດຊັ້ນຂອງປະເພດ ທີ່ດິນ/ປ່າໄມ້ ແມ່ນໄດ້ຈັດເຂົ້າເປັນ 5 ຊັ້ນ ໂດຍອີງໃສ່ປະລິມານສະສົມຂອງທາດກາກບອນທີ່ໃກ້ຄຽງກັນຕໍ່ເຮັກຕາ, ແລະ ອື່ນໆ. ວິທີນີ້ແມ່ນສາມາດຫຼຸດຜ່ອນຄວາມບໍ່ແນ່ນອນຂອງຂໍ້ມູນ ການປ່ອຍ/ກຳຈັດທາດອາຍພິດໃນຂະນະດຽວກັນກໍ່ເຮັດໃຫ້ຄວາມຖືກຕ້ອງຂອງຂໍ້ມູນການທົດລອງຕົວຢ່າງມີຄວາມສົມດຸນ ແລະ ຕົ້ນທຶນກໍ່ເຊັ່ນດຽວກັນ. ຈາກ 5 ຊັ້ນ ປະຫວັດແນວໂນ້ມການປ່ຽນແປງປະລິມານຂອງທາດກາກບອນທີ່ສະສົມໃນປ່າໄລຍະເວລາ 15 ປີໄດ້ນຳມາວິເຄາະວິໄຈສຳລັບທົ່ວປະເທດ ແລະ ໃນແຕ່ລະພາກທີ່ແຕກຕ່າງກັນ (ພາກເໜືອ, ພາກກາງ ແລະ ພາກໃຕ້). ເມື່ອສົມທຽບ FREL/FRL ແຫ່ງຊາດ ຕໍ່ UNFCCC, ໜ້າວຽກສຳລັບ FREL/FRL ຂອງ FCPF-CF ERPD ແມ່ນໄດ້ສຳເລັດຜົນເຊິ່ງໄດ້ປະຕິບັດຕາມລະບຽບວິທີການ, ຄຳແນະນາຈາກທະນາຄານໂລກ ແລະ ການພັດທະນາເຕັກນິກລ້າສຸດກ່ຽວກັບການຂຶ້ນບັນຊີທາດກາກບອນ. ຄວາມສອດຄ່ອງຂອງສອງ FREL/FRLs ຈະເປັນວຽກໜຶ່ງທີ່ຈະໄດ້ພິຈາລະນາ ແລະ ຈັດຕັ້ງປະຕິບັດໃນໄລຍະທີ 2 ຂອງໂຄງການ.

ຜົນໄດ້ຮັບທັງໝົດທີ່ກ່າວມາຂ້າງເທິງນັ້ນແມ່ນໄດ້ລາຍງານຕໍ່ກອງປະຊຸມວິຊາການ REL/MRV TWG ແລະ ໄດ້ຕົກລົງເຫັນດີເປັນເອກພາບກັນກ່ຽວກັບອົງປະກອບຂອງ FREL/FRLs ດັ່ງສະແດງໃຫ້ເຫັນໃນຕາຕະລາງທີ 4 ຂ້າງລຸ່ມນີ້:

**ຕາຕະລາງທີ 4: ອົງປະກອບຂອງ FREL/FRLs**

| ອົງປະກອບ | ລາຍລະອຽດທີ່ກຳນົດ |
|---|---|
| ນິຍາມປ່າໄມ້ | DBH: ≧10cm, ຄວາມປົກຫຸ້ມຂອງເຮືອນຍອດ: ≧20%, ຂອບເຂດພື້ນທີ່ຢ່າງໜ້ອຍ: ≧0.5 ha |
| ການຈັດປະເພດນຳໃຊ້ທີ່ດິນ ແລະ ປ່າໄມ້ | 8 ປະເພດປ່າລວມມີ 5 ປ່າທາມະຊາດ ແລະ 12 ປະເພດທີ່ບໍ່ແມ່ນປ່າໄມ້. |
| ປັດໄຈການປ່ອຍອາຍທາດພິດ (EF) | ປະລິມານຂອງທາດກາກບອນຕໍ່ຫົວໜ່ວຍພື້ນທີ່ໄດ້ຄິດໄລ່ໂດຍນຳໃຊ້ຂໍ້ມູນຈາກການສຳຫຼວດເຊັ່ນ:ການສຳຫຼວດປ່າໄມ້ແຫ່ງຊາດຄັ້ງທີສອງ, ແລະ ອື່ນໆ. ສາລັບ EF/MD/DD/CF/MCB/RV ແຕ່ລະປະເພດທີ່ດິນ ແລະ ປ່າໄມ້. ສຳຫຼັບ B ແມ່ນໄດ້ນຳໃຊ້ຄ່າຂອງປະເທດຫວຽດນາມ. ທີ່ດິນປະເພດອື່ນໆແມ່ນນຳໃຊ້ຄ່າໂດຍອີງໃສ່ຄູ່ມືແນະນຳຂອງ IPCC . ການນຳໃຊ້ຄ່າເຫຼົ່ານີ້ສຳລັບປັດໄຈ ການປ່ອຍ/ກຳຈັດທາດອາຍພິດ ແມ່ນໄດ້ກຳນົດເປັນທີ່ຮຽບຮ້ອຍ. |
| ຂໍ້ມູນກິດຈະກຳ (AD) | ການປະເມີນພື້ນທີ່ແມ່ນອີງໃສ່ຕົວຢ່າງ, ພາຍຫຼັງທີ່ມີການຈັດຊັ້ນປະເພດກາກບອນອອກເປັນຫ້າຊັ້ນ, ແຜນທີ່ປະເພດປ່າໄມ້ (2005, 2010, ແລະ 2015).ໄດ້ກະກຽມໃນລະດັບ 2. |
| ຂະໜາດ | ລະດັບຊາດ(UNFCCC), 6 ແຂວງພາກເໜືອ (FCPF CF) |
| ແຫຼ່ງສະສົມຂອງກາກບອນ | AGB: ເອົາ, BGB: ເອົາ, ໄມ້ຕາຍ: ບໍ່ເອົາ, ໄມ້ນ້ອຍ: ບໍ່ເອົາ, ດິນ: ບໍ່ເອົາ |
| ແກັ໊ດສ | $CO_2$: ເອົາ ແກັ໊ດປະເພດອື່ນໆ: ບໍ່ເອົາ |
| ກອບຂອງ (ກິດຈະກຳ) | ປັດໄຈການປ່ອຍທາດອາຍພິດຈາກການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້<br>ປັດໄຈການປ່ອຍທາດອາຍພິດຈາກຕໍໄມ້(ການເຮັດໃຫ້ປ່າໄມ້ເຊື່ອມໂຊມ)ຈາກການກະທຳຂອງມະນຸດ.<br>ການເພີ່ມແຫຼ່ງສະສົມຂອງທາດກາກບອນຈາກການປູກປ່າຄືນໃໝ່ ແລະ ການພື້ນຟູປ່າໄມ້ |
| ໄລຍະເວລາຂໍ້ມູນອ້າງອີງ | 2005-2015 (UNFCCC ແລະ FCPF CF) |
| ການຄັດເລືອກວິທີການ | ຂໍ້ມູນແບບສະເລ່ຍປະຈຳປີຂອງ GHG emissions ແລະ removals ໃນໄລຍະເວລາຂອງການອ້າງອີງ(UNFCC ແລະ FCPF CF) |
| ປັບປຸງດັດແກ້ | ຈະບໍ່ມີການປັບປຸງດັດປັບສຳລັບສະຖານະການລະດັບຊາດ |
| ການຈັດຊັ້ນ | 5 ຊັ້ນ (EF, MD/CF/MCB, DD, P/B/RV, ທີບໍ່ເປັນປ່າ) |

ຕໍ່ກັບຜົນໄດ້ຮັບເຫຼົ່ານີ້, ທາງໂຄງການໄດ້ສະຫນັບສະໜູນການຮ່າງ ແລະ ສິ່ງບົດລາຍງານ FREL/FREL ລະດັບຊາດ ລວມທັງ ERPD ໃນພາກທີກ່ຽວຂ້ອງກັບການຂຶ້ນບັນຊີຂອງທາດກາກບອນເຊິ່ງລວມທັງ FREL/FRL, ແລະ ປະຫວັດຄວາມເປັນມາຂອງເອກະສານຕ່າງໆ. ເສັ້ນສະແດງຂ້າງລຸ່ມນີ້ໄດ້ສະແດງໃຫ້ເຫັນເຖິງ FREL/FRL ລະດັບຊາດ (ຮູບພາບທີ 1) ແລະ FREl/FRL ຂອງ ERPD (ຮູບພາບທີ 2).

* ໝາຍເຫດທັງສອງຕົວເລກແມ່ນມີການປ່ຽນແປງຊົ່ວຄາວ ແລະ ການປ່ຽນແປງຫົວຂໍ້ໂດຍຜ່ານຂັ້ນຕອນການປະເມີນດ້ານວິຊາການ.




**ຮູບພາບທີ 1: FREL/FRL (UNFCCC)**




**ຮູບພາບທີ 2: FREL/FRL (FCPF CF)**

**ກິດຈະກຳ 2-4 ສະໜັບສະໜູນການສຳຫຼວດປ່າໄມ້ແຫ່ງຊາດ (NFI) (2016-2017)**

ໂຄງການໄດ້ໃຫ້ການສະໜັບສະໜູນຈັດຕັ້ງປະຕິບັດການສຳຫຼວດປ່າໄມ້ແຫ່ງຊາດຄັ້ງທີ 2 ໃນທັງ 2 ຊ່ວງລະດູແລ້ງໃນການສຳຫຼວດລະຫວ່າງສົກປີ 2015-2016, ແລະ ສົກປີ 2016-2017 ສົມທົບທຶນຮ່ວມກັບ FCPF RP, ແລະ ກອງທຶນພັດທະນາປ່າ ແລະ ຊັບພະຍາກອນປ່າໄມ້ (ພາຍໃຕ້ກົມປ່າ). ໄດ້ກະກຽມຄູ່ມື ການສຳຫຼວດປ່າໄມ້ແຫ່ງຊາດ ແລະ ຈັດຝຶກອົບຮົມກ່ອນການລົງສຳຫຼວດ. ໃນຊ່ວງລະດູແລ້ງສົກປີ 2015-2016 ໄດ້ຈັດຕັ້ງປະຕິບັດລິເລີ່ມການສຳຫຼວດ, ເຊິ່ງແບ່ງອອກເປັນ 4 ທີມ ແລະ ໃນຊ່ວງລະດູແລ້ງສົກປີ 2016-2017 ໄດ້ຈັດຕັ້ງປະຕິບັດລິເລີ່ມການສຳຫຼວດ, ເຊິ່ງແບ່ງອອກເປັນ 6 ທີມ. ແຕ່ລະທີມມີສະມາຊິກຫຼັກພາຍໃນທີມທັງໝົດ 3 ຄົນ. 1 ທ່ານຈາກ ກອງສຳຫຼວດ ແລະ ວາງແຜນປ່າໄມ້, 1 ທ່ານຈາກ PAFO, ໜຶ່ງທ່ານຈາກ DAFO, ນອກນັ້ນຍັງມີ ຄົນຂັບລົດ, ແລະ ຊາວບ້ານ.

ຂໍ້ມູນການສຳຫຼວດແມ່ນໄດ້ບັນທຶກລົງໃນແທັບເລັດຢູ່ພາກສະໜາມ, ຫຼັງຈາກນັ້ນລວບລວມ ແລະ ສົ່ງຜ່ານ ແລະ ເກັບໄວ້ໃນຄາວສ (ເວັບໄຊ້ທີ່ສ້າງຂຶ້ນສະເພາະ: ONA), ແລະ ວິເຄາະຂໍ້ມູນທາງສະຖິຕິໂດຍນຳໃຊ້ສະຄິບສເຊິ່ງພັດທະນາຂຶ້ນຈາກຟຣີຊອບແວ "R". ລະບົບດັ່ງກ່າວນີ້ແມ່ນມີຄວາມສະດວກຄືກັບການຕິດຕາມກວດສອບຜົນຂອງການສຳຫຼວດແບບໃກ້ຄຽງເວລາທີ່ແທ້ຈິງ, ນອກນັ້ນຍັງສາມາດການົດຈຸດສາຫຼວດຕໍ່ໄປ ແລະ ແນະນາທີມງານສາຫຼວດຜ່ານລະບົບ"Lao NFI Dash" portal).




**ຮູບພາບທີ 3: ຂັ້ນຕອນຂອງການຕິດຕາມກວດກາ NFI**

ນອກຈາກນີ້ເພື່ອເປັນການສະໜັບສະໜູນການສຳຫຼວດປ່າໄມ້ແຫ່ງຊາດຄັ້ງທີ 2, ການສຳຫຼວດປ່າເຫຼົ່າ (RV) (ເຊິ່ງນອກ ເໜືອຈາກການສຳຫຼວດ ຄັ້ງທີ 2) ແມ່ນໄດ້ຈັດຕັ້ງປະຕິບັດໂດຍ ກອງສຳຫຼວດ ແລະ ວາງແຜນປ່າໄມ້ ເພື່ອສຶກສາເຖິງປີ (ຈັດຈຳແນກເປັນ "ປ່າເຫຼົ່າ": RV) ຫຼື ເກນອາຍຸປີຂອງປ່າເຫຼົ່າທີ່ຈະກາຍມາເປັນປ່າໂດຍອີງໃສ່ນິຍາມປ່າໄມ້ຂອງ ສ ປ ປ ລາວ. ລວມທັງເພື່ອວັດແທກຊີວະມວນສານຂອງພືດພັນປະເພດນີ້. ຜົນໄດ້ຮັບຈາກການສຳຫຼວດໄດ້ສະແດງໃຫ້ເຫັນເກນອາຍຸສະເລ່ຍຂອງປ່າເຫຼົ່າ RV ທີ່ຈະກາຍເປັນປ່າແມ່ນຢູ່ທີ່ 7 ປີ. ຈາກການເພີ່ມຈຳນວນໜຶ່ງປີສຳລັບທຳການຜະລິດ (ຈັດຈຳແນກ

ເປັນ "UC"), ດັ່ງນັ້ນຄາດວ່າພື້ນທີ່ຖືກຖາງ ແລະ ຈູດສາມາດກັບກາຍມາເປັນປ່າຄືນໃໝ່ໄດ້ໃນໄລຍະ 8 ປີ ຫາກປັດສະຈາກການລົບກວນ. ເຊິ່ງຜົນໄດ້ຮັບດັ່ງກ່າວແມ່ນນຳໃຊ້ເຂົ້າໃນການຈຳແນກປ່າເຫຼົ່າ. ສຳລັບຄ່າທີ່ໄດ້ຈາກການວັດແທກຊີວະມວນສານ ແມ່ນນຳໃຊ້ເພື່ອ ພັດທະນາປັດໄຈຂອງການປ່ອຍ/ກຳຈັດທາດອາຍພິດ.

**ບັນຫາ ແລະ ສິ່ງທ້າທາຍ**

- ມີຄວາມຈຳເປັນໃນການພັດທະນາຕາມລຳດັບຂັ້ນຂອງລະບົບ NFMS, ເຊັ່ນ: ການເພີ່ມຟັງຊັ້ນເພື່ອຕິດຕາມກວດກາສາເຫດຂອງການເຮັດໃຫ້ປ່າໄມ້ເຊື່ອມໂຊມ ແລະ ການຕັດໄມ້ທຳລາຍປ່າ, ນະໂຍບາຍ ແລະ ມາດຕະການຕ່າງໆ (PaMs), ແລະ ອື່ນໆ. ສິ່ງນີ້ຄວນໄດ້ຮັບການປຶກສາຫາລືຕື່ມອີກໃນໄລຍະທີ 2 ຂອງໂຄງການ, ໃນການປະສານສົມທົບຮ່ວມກັບຜົນໄດ້ຮັບທີ 4 ຂອງໂຄງການ ແລະ ປະສານງານກັບໂຄງການອື່ນໆ/ຄູ່ຮ່ວມວຽກ.

- ນອກເໜືອຈາກ ເຣດ+ ລະດັບຊາດແລ້ວ ໃນ ສ ປ ປ ລາວ ຍັງລວມເຖິງໂຄງການລະດັບຊາດ (FCPF, ERP, ທ້ອງຖິ່ນ) ໂຄງການ ເຣດ+ ໃນເຂດປ່າພິເສດ, ແລະ ອື່ນໆ ທີ່ໄດ້ຈັດຕັ້ງປະຕິບັດໃນລະດັບຂັ້ນຕ່າງໆ. ເພື່ອຫຼີກເວັ້ນການນັບຊ້ຳຂອງການຫຼຸດຜ່ອນການປ່ອຍ ແລະ ກຳຈັດທາດອາຍພິດ, ໄລຍະທີ 2 ຂອງໂຄງການນີ້ຄວນຈະພິຈາລະນາໃນການພັດທະນາການລົງທະບຽນທາດກາກບອນ.

- ລະບົບ NFMS ຕ້ອງມີຄວາມໂປ່ງໃສ. ຈຳເປັນຈະຕ້ອງມີການປັບປຸງແກ້ໄຂໂຄງສ້າງຂອງລະບົບ NFMS ທີ່ມີຢູ່ໃນປັດຈຸບັນລວມໄປເຖິງການຕິດຕັ້ງລະບົບຄວາມປອດໄພໃຫ້ມີປະສິດທິພາບ ແລະ ປັບປຸງການໃຊ້ງານບາງຢ່າງ.

- ທີມງານຄຸ້ມຄອງຖານຂໍ້ມູນໃນ FIPD ມີພຽງແຕ່ 4 ຄົນເທົ່ານັ້ນ. ເຊິ່ງມີຄວາມຈຳເປັນຕ້ອງໄດ້ເສີມສ້າງຄວາມເຂັ້ມແຂງ, ຄວາມຮູ້ຄວາມສາມາດທາງດ້ານ IT ແລະ GIS ໃຫ້ແກ່ບຸກຄະລາກອນ, ເພື່ອທີ່ຈະສາມາດຄຸ້ມຄອງຈັດການກັບລະບົບ NFMS.

- ທາງກົມປ່າໄມ້ ຄວນຈະຈັດສັນງົບປະມານໃນການບຳລຸງຮັກສາລະບົບ NFMS ເພື່ອໃຫ້ນຳໃຊ້ໄດ້ຍາວນານ.

- ມີຄວາມຈຳເປັນຕ້ອງໄດ້ສ້າງຄວາມເຂັ້ມແຂງ, ທັກສະ, ຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານຂອງ FIPD ໃນດ້ານການອອກແບບ ແລະ ວິເຄາະ ວຽກງານທີ່ກ່ຽວຂ້ອງກັບການສຳຫຼວດປ່າໄມ້ແຫ່ງຊາດ, ດ້ານການແປພາບຖ່າຍດາວທຽມ, ເຕັກໂນໂລຢີ remote sensing ແບບໃໝ່ໆ, ແລະ ອື່ນໆ.

- ກ່ຽວກັບພຶດ (RV) ເປັນປະເພດປ່າທີ່ສຳຄັນສຳລັບວຽກງານ ເຣດ+ ໃນ ສ ປ ປ ລາວ. ຕົວຢ່າງເຊັ່ນ: ຄວາມໄວໃນການຈະເລີນເຕີບໂຕ ແລະ ຊີວະມວນສານຂອງ RV ສາມາດສືບຕໍ່ສຳຫຼວດສຶກສາໄດ້. ເຊັ່ນດຽວກັນ ນັບແຕ່ ການຖາງ ແລະ ຈູດ ເພື່ອທຳການຜະລິດກະສິກຳ ແມ່ນສາເຫດຫຼັກຂອງການປ່ອຍທາດອາຍພິດ. ການສຳຫຼວດທາດອາຍແກັດທີ່ບໍ່ແມ່ນທາດ CO2 ຈາກການຖາງ ແລະ ຈູດປ່າອາດຈະເປັນປະໂຫຍດໃນອະນາຄົດກໍ່ເປັນໄດ້.

- ທີມງານຮ່າງເອກະສານຄວນຈະມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບ FREL/FRL, ເຊັ່ນ: ການປະເມີນຄວາມບໍ່ແນ່ນອນ, ການສ້າງຄວາມໝັ້ນໃຈໃນເວລາຕອບຄຳຖາມກັບທີມງານປະເມີນດ້ານວິຊາການຈາກ UNFCCC ເຊັ່ນດຽວກັນກັບ ກອງທຶນກາກບອນ FCPF. ການປະເມີນດ້ານວິຊາການຈະມີຄວາມເຂັ້ມງວດ, ແຕ່ວ່າເປັນວຽກໄລຍະຍາວ, ທາງໂຄງການຈຳເປັນຕ້ອງໄດ້ສະໜັບສະໜູນ ແລະ ກຽມຄວາມພ້ອມໃຫ້ແກ່ວິຊາການ.

- ໄລຍະທີ 2 ຂອງໂຄງການມີແຜນທີ່ຈະສະໜັບສະໜູນວຽກງານ MRV ລະດັບຊາດ ຄັ້ງທີ1. ຈຳເປັນຕ້ອງໄດ້ກຳນົດວິທີການທີ່ແທດເໝາະ ແລະ ຍືນຍົງ ທີ່ສຸດ ດ້ານ remote sensing ເພື່ອທີ່ຈະພັດທະນາຂໍ້ມູນກິດຈະກຳ. ຄວນຈະພິຈາລະນາການສຳຫຼວດປ່າໄມ້ແຫ່ງຊາດ ຄັ້ງທີ 3 ສຳລັບ MRV ລວມທັງປະລິມານການປ່ອຍທາດອາຍພິດຈາກການເຊື່ອມໂຊມຂອງປ່າໄມ້ຈາກການເລືອກຂຸດຄົ້ນໄມ້ ຜ່ານການຄຳນວນ ແບບທາງອ້ອມ.

- ການສົ່ງບົດລາຍງານ FREL/FRL ຕໍ່ UNFCCC ຄວນຈະວາງແຜນໃຫ້ລະອຽດຖີ່ຖ້ວນເພື່ອຈະສົ່ງບົດລາຍງານໃຫ້ທັນຕາມກໍານົດເວລາ (8 ມັງກອນ 2018).

**(3) ຜົນໄດ້ຮັບ ທີ 3**

| | |
|---|---|
| ຜົນໄດ້ຮັບ | ຍົກລະດັບການພັດທະນາ ແລະ ການຄຸ້ມຄອງ ສະຖາບັນການຈັດຕັ້ງ, ແລະ ການປະສານງານກ່ຽວກັບວຽກງານເຣດ+ແຫ່ງຊາດ |
| ຕົວຊີ້ວັດ | ອີງຕາມຂໍ້ມູນຂອງລະບົບການຕິດຕາມກວດກາປ່າໄມ້ແຫ່ງຊາດ (NFMS), ປະສິດທິຜົນຂອງກິດຈະກໍາເຣດ+ແມ່ນໄດ້ຮັບການປະເມີນໂດຍພາກສ່ວນທີ່ກ່ຽວຂ້ອງ (ເຊັ່ນ: ກຊສ, ກປ, ພະນັກງານທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາອື່ໆ) ໂດຍຜ່ານຂັ້ນຕອນການປຶກສາຫາລືຮ່ວມກັນ |
| ວິທີການຢັ້ງຢືນຕົວຊີ້ວັດ | ບົດສະຫຼຸບການປະເມີນ ສົ່ງໃຫ້ ຄະນະຊີ້ນໍາສະເພາະດ້ານວຽກງານ REDD+ (NRTF). |
| ສະຫຼຸບຄວາມຄືບໜ້າ | ຜົນໄດ້ຮັບ 3.1 ແມ່ນມີຄວາມຄືບໜ້າຕາມແຜນທີ່ວາງໄວ້ ເຖິງແມ່ນວ່າ ຈະຍັງມີບາງວຽກງານທີ່ລ່າຊ້າ ແຕ່ກໍ່ມີຄວາມເປັນໄປໄດ້ສູງວ່າຈະປະສິບຜົນສໍາເລັດຕາມແຜນທີ່ວາງໄວ້. ເຖິງຢ່າງໃດກໍ່ຕາມ ຜົນໄດ້ຮັບ 3.3 ແມ່ນກິດຈະກໍາທີ່ຢູ່ພາຍໃຕ້ ການເຈລະຈາລະຫວ່າງທັງສອງລັດຖະບານ ກ່ຽວກັບວຽກງານ JCM-REDD+, ສະນັ້ນ ວຽກງານນີ້ຈະຢູ່ນອກກອບຂອງໂຄງການ ເຊິ່ງໂຄງການບໍ່ສາມາດຄວບຄຸມໄດ້ ແລະ ກໍ່ຈະເປັນການຍາກທີ່ຈະ ຄາດຄະເນ ການສະໜັບສະໜູນຈາກໂຄງການ ວ່າຈະມີໃນລັກສະນະໃດ ຕໍ່ກັບວຽກງານດັ່ງກ່າວ. |

**ກິດຈະກໍາ 3-1 ສະໜອງດ້ານຄວາມຮູ້ວິຊາການ ໃຫ້ແກ່ນະໂຍບາຍ ແລະ ສະຖາບັນ ເຣດ+ ແຫ່ງຊາດ**

ຍຸດທະສາດ ເຣດ+ ແຫ່ງຊາດ ແມ່ນກໍາລັງຢູ່ໃນຂັ້ນຕອນການສ້າງ ເຊິ່ງໄດ້ຮັບການສະໜັບສະໜູນຫຼັກຈາກ ໂຄງການ. ສໍາລັບໂຄງການ F-REDD ແມ່ນໄດ້ ປະກອບສ່ວນທາງດ້ານວິຊາການ ໃນຂະບວນການດັ່ງກ່າວ ເຊັ່ນ ສະໜັບສະໜູນດ້ານການວິເຄາະສາເຫດການທໍາລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້, ແລະ ການສ້າງ ນະໂຍບາຍ ແລະ ມາດຕະການ (PaMs) (ເບິ່ງກິດຈະກໍາ 2-3), ແລະ ຜ່ານການເຂົ້າຮ່ວມກອງປະຊຸມປຶກສາຫາລື. ຫຼາຍໆກອງປະຊຸມທີ່ຈັດໃຫ້ສະເພາະກຸ່ມ TWGs ແມ່ນເປັນການສະໜັບສະໜູນຈາກໂຄງການ ແລະ ຄູ່ຮ່ວມພັດທະນາອື່ນໆ ເຊິ່ງຜົນໄດ້ຮັບຂອງກອງປະຊຸມ ກໍ່ເປັນສ່ວນໜຶ່ງທີ່ນໍາເອົາມາສ້າງ ຍຸດທະສາດ ເຣດ+ ແຫ່ງຊາດ.

ນອກຈາກນີ້ ຍັງໄດ້ອໍານວຍຄວາມສະດວກ ໃຫ້ມີການຮ່ວມມືປະສານງານລະຫວ່າງຂະແໜງການປ່າໄມ້ (ນໍາພາໂດຍ ກົມປ່າໄມ້) ແລະ ຂະ ແໜງການປ່ຽນແປງດິນຟ້າອາກາດ (ນໍາພາໂດຍ ກົມປ່ຽນແປງດິນຟ້າອາກາດ) ດ້ວຍວິທີການລວມເອົາພະນັກງານກົມປ່ຽນແປງດິນຟ້າອາກາດ ເຂົ້າມາຢູ່ໃນທີມງານ REL/MRV TWG. ພ້ອມດຽວກັນນັ້ນ ຍັງໄດ້ມີການຮ່ວມມືປະສານງານລະຫວ່າງ ໜ່ວຍງານເຣດ+ ຂັ້ນສູນກາງ ແລະ ແຂວງຫຼວງພະບາງ ໂດຍສະເພາະໃນໄລຍະການສ້າງ ແຜນປະຕິບັດງານເຣດ+ ຂັ້ນແຂວງ (PRAP) ແລະ ເອກະສານ ERPD ເຊິ່ງກິດຈະກໍານີ້ ແມ່ນຢູ່ພາຍໃຕ້ຜົນໄດ້ຮັບທີ່ 4. ທັງນີ້ກໍ່ແມ່ນເພື່ອໃຫ້ວຽກງານຂອງທັງສູນກາງ ແລະ ທ້ອງຖິ່ນ ມີຄວາມສອດຄ່ອງກັນ.

ຕອນນີ້ແມ່ນກໍາລັງຢູ່ໃນຂັ້ນຕອນການກະກຽມ ຮ່າງເອກະສານ ERPD ເຊິ່ງຈະຕ້ອງໄດ້ສົ່ງໃນເດືອນມັງກອນ 2018 ນີ້. ຊ່ຽວຊານຂອງໂຄງການ F-REDD ແມ່ນໜຶ່ງໃນທີມງານຮ່າງເອກະສານດັ່ງກ່າວ ແລະ ໄດ້ປະກອບສ່ວນໃນຂະບວນການກະກຽມ ແລະ ຮັບຜິດຊອບສະເພາະ ຮ່າງໃນພາກທີ່ກ່ຽວຂ້ອງກັບການຄິດໄລ່ກາກບອນ (REL, MRV, ການຄິດໄລ່ຄວາມບໍ່ແນ່ນອນ ແລະ ອື່ນໆ), ສາເຫດການທໍາລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້, ນະໂຍບາຍ ແລະ ມາດຕະການ (PaMs), ກິດຈະກໍາ ໃນແຂວງຫຼວງພະບາງ ແລະ ອື່ນໆ.

**ກິດຈະກຳ 3-2 ສະໜັບສະໜູນບົດບາດການປະສານງານຂອງກົມປ່າໄມ້ກ່ຽວກັບວຽກງານເຣດ+ ໃນລະດັບຊາດ**

ເນື່ອງຈາກມີການປັບປຸງໂຄງຮ່າງການຈັດຕັ້ງຂອງລັດຖະບານ ຈຶ່ງເຮັດໃຫ້ຕ້ອງໄດ້ມີການປັບປຸງ ຄະນະຊີ້ນຳສະເພາະດ້ານວຽກງານເຣດ+ ແຫ່ງຊາດ ແລະ ເຮັດໃຫ້ມີການເລື່ອນ ກອງປະຊຸມຂອງຄະນະດັ່ງກ່າວ, ເຊິ່ງທີ່ຜ່ານມາ ແມ່ນໄດ້ຈັດກອງປະຊຸມທັງໝົດ 2 ຄັ້ງ (ມັງກອນ 2016 ແລະ ສິງຫາ 2017)ໃນໄລຍະທີ່ 1 ຂອງໂຄງການ. ໂຄງການແມ່ນໄດ້ປະກອບສ່ວນ ແລະ ນຳສະເໜີ ບົດ ໃນກອງປະຊຸມດັ່ງກ່າວ.

ພ້ອມດຽວກັນນັ້ນ, ໂຄງການຍັງໄດ້ ສະໜັບສະໜູນການດຳເນີນງານຂອງທັງ 6 ກຸ່ມ TWGs, ແລະ ໄດ້ປະກອບສ່ວນເປັນຜູ້ສະໜັບສະໜູນຫຼັກ ໃນວຽກງານຂອງກຸ່ມ REL/MRV. TORs ແລະ ແຜນວຽກຂອງທັງ 6 ກຸ່ມ TWGs ແມ່ນໄດ້ສ້າງສຳເລັດ ໃນເດືອນ ມີນາ 2017. ດັ່ງທີ່ໄດ້ກ່າວມາກ່ອນໜ້ານີ້ ໂຄງການ F-REDD ແລະ ໂຄງການ ແລະ ຄູ່ຮ່ວມພັດທະນາອື່ນໆໄດ້ຮ່ວມມືກັນຈັດຝຶກອົບຮົມໃນຫຼາຍໆຄັ້ງ ເພື່ອສ້າງຄວາມອາດສາມາດໃຫ້ ສະມາຊິກ ຂອງທັງ 6 ກຸ່ມ TWG.
ໃນຖານະ ເປັນຄູ່ຮ່ວມງານຫຼັກ ຂອງກຸ່ມ REL/MRV, ໂຄງການແມ່ນໄດ້ສະໜັບສະໜູນ ໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆ ຂອງກຸ່ມດັ່ງກ່າວ ເຊັ່ນ TOR, ແຜນວຽກ, ແລະ ຈັດກອງປະຊຸມຂອງກຸ່ມ ດັ່ງກ່າວ ທຸກໆ ໄຕມາດ.

**ຕາຕະລາງທີ 5: ພາບລວມກອງປະຊຸມ ຂອງກຸ່ມ REL/MRV**

| ປະຊຸມ | ວັນທີ | ຈຳນວນຜູ້ເຂົ້າຮ່ວມ | ເນື້ອໃນ |
|---|---|---|---|
| ກອງປະຊຸມກະກຽມ | 2016.2.8 | 12 | ປຶກສາຫາລື ຮ່າງ TOR ແລະ ຮ່າງແຜນວຽກ |
| ກອງປະຊຸມກະກຽມ | 2016.2.23 | 9 | ຢັ້ງຢືນຮ່າງ TOR ແລະ ຮ່າງແຜນວຽກ |
| ກອງປະຊຸມຄັ້ງທີ 1 | 2016.4.27 | 30 | ຮັບຮອງ TOR ແລະ ແຜນວຽກ, ສະເໜີ ພາບລວມຂອງເຣດ+ (ຄວາມຮູ້ພື້ນຖານ, FREL/FRL, MRV, NFMS), ປະເພດດິນ ແລະ ປ່າ. |
| ກອງປະຊຸມຄັ້ງທີ 2 | 2016.9.2 | 31 | ທີມງານຮ່າງເອກະສານ REL, ແຜນການສ້າງລະບົບ NFMS, ໜ້າທີ່ ແລະ ລະບົບການທຳງານຕ່າງໆ ໂດຍເບິ່ງຕົວຢ່າງຈາກປະເທດອື່ນໆ. |
| ກອງປະຊຸມຄັ້ງທີ 3 | 2017.1.17 | 33 | ຄວາມຄືບໜ້າຂອງ NFI, ສະເໜີຜົນໄດ້ຮັບເບື້ອງຕົ້ນ ຂອງການສຳຫຼວດ RV. |
| ກອງປະຊຸມຄັ້ງທີ 4 | 2017.5.24 | 30 | ປັດໄຈການປ່ອຍ ແລະ ການກຳຈັດ, ຂໍ້ມູນກິດຈະກຳ (AD), ຜົນການສຳຫຼວດ RV, ສູດຄິດໄລ່ຢູ່ໃນ REL. |
| ກອງປະຊຸມ ພິເສດ | 2017.8.15 | 25 | ກອງປະຊຸມ ວິຊາການສະເພາະ ເພື່ອສະຫຼຸບ ວິທີການຂອງ REL. |
| ກອງປະຊຸມຄັ້ງທີ 5 | 2017.8.25 | 25 | ຕົກລົງເຫັນດີ ວິທີການຂອງ REL, ນຳສະເໜີລະບົບຖານຂໍ້ມູນຂອງ NFMS, ນິຍາມປ່າໄມ້ ແລະ ປະເພດດິນ ແລະ ປ່າ. |

**ກິດຈະກຳ 3-3 ໃຫ້ການສະໜັບສະໜູນທາງອ້ອມແກ່ ວຽກງານ JCM-REDD+ ອີງຕາມຄວາມຄືບໜ້າຂອງວຽກງານດັ່ງກ່າວ.**

ໂຄງການ ແມ່ນໄດ້ໃຫ້ການສະໜັບສະໜູນທາງອ້ອມ ເພື່ອອຳນວຍຄວາມສະດວກ ໃນການປຶກສາຫາລື 2 ຝ່າຍ ລະຫວ່າງລັດຖະບານ ສປປ ລາວ ແລະ ຍີ່ປຸ່ນ ໃນວຽກງານ JCM-REDD+. ໂຄງການຍັງໄດ້ນຳສະເໜີວຽກງານດັ່ງກ່າວ ໂດຍຫຍໍ້ ໃຫ້ແກ່ ກົມປ່າໄມ້ ເຊັ່ນ ຄວາມຄືບໜ້າປະຈຸບັນ ແລະ ຕົວຢ່າງຈາກປະເທດອື່ນໆ. ແນວທາງ ຂອງ ວຽກງານ JCM-REDD+ ແມ່ນກຳລັງຢູ່ໃນຂັ້ນຕອນການກະກຽມ ໂດຍຄະນະຊີ້ນຳຮ່ວມ JCM. ຕອນນີ້ ແມ່ນມີ ມະຫາວິທະຍາໄລ Waseda ຈາກປະເທດຍີ່ປຸ່ນ ທີ່ກຳລັງພິຈາລະນາ ດຳເນີນ ໂຄງການຕົວແບບ ຂອງວຽກງານ JCM-REDD+ ໃນແຂວງຫຼວງພະບາງ. ໂຄງການ F-REDD ຍັງໄດ້ເຂົ້າຮ່ວມກອງປະຊຸມຂອງຄະນະກຳມະການຮ່ວມ JCM ຄັ້ງທີ 2 ແລະ 3 ເຊິ່ງຈັດຂຶ້ນຢູ່ທີ່ນະຄອນຫຼວງວຽງຈັນ (14 ຕຸລາ 2016 ແລະ 31 ກໍລະກົດ 2017) ໃນຖານະຜູ້ສັງເກດການ, ແລະ ຍັງໄດ້ເຂົ້າຮ່ວມ ກອງປະຊຸມຄະນະຊີ້ນຳຮ່ວມ ຂອງໂຄງການຕົວແບບ JCM-REDD+, ແລະ ເຂົ້າຮ່ວມຝຶກອົບຮົມ JCM-REDD+ (ທັງ 2 ກອງປະຊຸມ ແລະ ຝຶກອົບຮົມ ໄດ້ຈັດຂຶ້ນໃນວັນທີ 26 ທັນວາ 2016).

**ບັນຫາ ແລະ ສິ່ງທ້າທາຍ**

- ພາຍຫຼັງມີການປັບປຸງໂຄງຮ່າງການຈັດຕັ້ງ ຂອງລັດຖະບານ, ແຕ່ວ່າ ພະແນກ ເຣດ+ ຂອງກົມປ່າໄມ້ ກໍ່ຍັງບໍ່ທັນມີບຸກຄະລາກອນທີ່ພຽງພໍ ເມື່ອທຽບໃສ່ໜ້າວຽກຂອງພະແນກດັ່ງກ່າວ. ສະນັ້ນ ຈຶ່ງມີຄວາມຈໍາເປັນທີ່ຈະຕ້ອງໄດ້ ສ້າງຄວາມອາດສາມາດເພີ່ມຕື່ມ ໃຫ້ແກ່ ພະແນກ ດັ່ງກ່າວ, ໂດຍສະເພາະ ໃນລະຫວ່າງໄລຍະການກ້າວຈາກຂັ້ນຕອນການກະກຽມ ເຣດ+ ໄປສູ່ ການຂັ້ນຕອນການທົດລອງໂຄງການ ແລະ ການຈັດຕັ້ງປະຕິບັດໃນຂັ້ນ ທົ່ວປະເທດ, ແລະ ຂັ້ນຕອນການຈ່າຍຕາມຜົນໄດ້ຮັບ.

- ຍຸດທະສາດເຣດ+ ແຫ່ງຊາດ, ແຜນປະຕິບັດງານເຣດ+ ຂັ້ນແຂວງ ແລະ ເອກະສານ ERPD ແມ່ນໄດ້ຖືກສ້າງໄປພ້ອມໆກັນ ໃນຊ່ວງໄລຍະທີ 1 ຂອງໂຄງການ F-REDD, ເຊິ່ງເປັນຈຸດດີ ເພື່ອເຮັດໃຫ້ທັງ 3 ເອກະສານ ມີເນື້ອໃນສອດຄ່ອງກັນ. ທັງນີ້ ຄວນມີການປະສານງານເພີ່ມຕື່ມ ກ່ອນທັງ 3 ເອກະສານ ຈະຖືກສົ່ງໄປພິຈາລະນາຮັບຮອງ.

- ພາຍຫຼັງ ບົດລາຍງານ FREL/FRL ແຫ່ງຊາດ ໄດ້ຖືກສົ່ງໃຫ້ UNFCCC ແລະ ເອກະສານ ERPD ໄດ້ຖືກສົ່ງໃຫ້ FCPF CF ແລ້ວ (ຕາມການກໍານົດສົ່ງໃນເດືອນ ມັງກອນ 2018), ທັງ ສອງ ເອກະສານ ແມ່ນຈະໄດ້ຖືກປະເມີນ ແລະ ທົບທວນ ຢ່າງລະອຽດ, ສະນັ້ນ ມັນມີຄວາມຈໍາເປັນ ທີ່ ໂຄງການ F-REDD ຕ້ອງໄດ້ໃຫ້ການສະໜັບສະໜູນທີ່ພຽງພໍ.

- ສະມາຊິກຂອງທັງ 6 ກຸ່ມ TWGs, ທີ່ຢູ່ພາຍໃຕ້ການຊີ້ນໍາຂອງ ຄະນະຊີ້ນໍາສະເພາະດ້ານວຽກງານເຣດ+ ແຫ່ງຊາດ (NRTF), ແມ່ນຈະມີບົດບາດຫຼັກ ໃນວຽກງານເຣດ+ ໃນຕໍ່ໜ້າ. ການສ້າງຄວາມອາດສາມາດ ໃຫ້ບັນດາສະມາຊິກ ແລະ ການປະສານງານລະຫວ່າງຂະແໜງການ ແມ່ນເປັນສິ່ງທ້າທ້າຍ ໃນໄລຍະທີ 1 ຂອງໂຄງການ, ແລະ ຄາດວ່າຈະເປັນສິ່ງທ້າທ້າຍ ໃນຊ່ວງໄລຍະທີ 2 ຂອງໂຄງການເຊັ່ນດຽວກັນ.

- ໂດຍລວມ ວຽກງານເຣດ+ ຢູ່ໃນ ສປປ ລາວ ແມ່ນຍັງຢູ່ໃນຂັ້ນຕອນການກະກຽມ. ສະນັ້ນ ເພື່ອກຽມຄວາມພ້ອມ ກ່ອນຮອດຂັ້ນຕອນການຈ່າຍຕາມຜົນໄດ້ຮັບ ໃນອະນາຄົດ (ຈາກ FCPF CF, GCF), ອົງປະກອບຕ່າງໆ ຂອງ ເຣດ+ ເຊັ່ນ: NFMS, MRV, SIS, ແລະ ອື່ນໆ ຄວນມີພ້ອມແລ້ວ. ອົງປະກອບອື່ນໆ ເຊັ່ນ ການຕິດຕາມກວດກາປ່າໄມ້ ແລະ ກົນໄກການແບ່ງປັນຜົນປະໂຫຍດ ກໍ່ຕ້ອງໄດ້ສ້າງຂຶ້ນມາເຊັ່ນດຽວກັນ. ເພື່ອໃຫ້ອົງປະກອບຕ່າງໆເຫຼົ່ານີ້ ມີພ້ອມ, ຝ່າຍລັດຖະບານ ສປປ ລາວ ແລະ ບັນດາໂຄງການ/ຄູ່ຮ່ວມພັດທະນາ ຕ້ອງໄດ້ມີສ່ວນຮ່ວມຢ່າງເຂັ້ມງວດ.

- ເຖິງແມ່ນວ່າ ການເຈລະຈາວຽກງານ JCM-REDD+ ຂອງທັງ 2 ລັດຖະບານ ແມ່ນຢູ່ນອກກອບການຄວບຄຸມຂອງໂຄງການ, ຄາດວ່າໂຄງການຍັງຈະມີການສືບຕໍ່ ສະໜັບສະໜູນ ແບບທາງອ້ອມ ໃຫ້ວຽກງານ ດັ່ງກ່າວ.

**(4) ຜົນໄດ້ຮັບທີ 4**

| | |
|---|---|
| ຜົນໄດ້ຮັບ | ສ້າງຄວາມພ້ອມ ວຽກງານເຣດ+ ໃນແຂວງຫຼວງພະບາງ. |
| ຕົວຊີ້ວັດ | ຜົນໄດ້ຮັບຂອງກິດຈະກໍາໃນແຂວງຫລວງພະບາງແມ່ນໄດ້ນໍາໃຊ້ສໍາລັບການກໍານົດນະໂຍບາຍປ່າໄມ້/ເຣດ+ແຫ່ງຊາດ |
| ວິທີການຢັ້ງຢືນຕົວຊີ້ວັດ | ບົດລາຍງານສະແດງຄວາມຄິດເຫັນ ໃນກອງປະຊຸມ. |
| ສະຫຼຸບຄວາມຄືບໜ້າ | ບັນດາກິດຈະກໍາ ແມ່ນໄດ້ຖືກຈັດຕັ້ງປະຕິບັດຕາມແຜນທີ່ວາງໄວ້. ເຖິງແມ່ນວ່າ ກິດຈະກໍາຕ່າງໆ ທີ່ໄດ້ຈັດຂຶ້ນແມ່ນເນັ້ນໃສ່ ເພີ່ມທະວີ ການຄຸ້ມຄອງປ່າປ້ອງກັນ ໃນເຂດ ໂຄງການຕົວແບບ ເພື່ອສ້າງນະໂຍບາຍປ່າໄມ້ບຸລິມະສິດ, ວຽກງານການແບ່ງເຂດ 3 ປະເພດປ່າ ໃນພື້ນທີ່ ທົ່ວປະເທດ ທີ່ຈະຈັດຕັ້ງປະຕິບັດໂດຍ ລັດຖະບານຂັ້ນສູນກາງ ແມ່ນໄດ້ຖືກເລື່ອນອອກໄປ, ເຮັດໃຫ້ມີຜົນຕໍ່ການກໍານົດເຂດປ່າປ້ອງກັນໃນເຂດໂຄງການຕົວແບບ. |

**ກິດຈະກຳ 4-1 ສ້າງຕັ້ງຮ່າງກອບໜ້າວຽກຂອງສະຖາບັນສຳລັບການຈັດຕັ້ງປະຕິບັດວຽກງານເຣດ+ ໃນລະດັບແຂວງ**

ຜ່ານການສະໜັບສະໜູນຈາກໂຄງການ, ແຂວງຫຼວງພະບາງ ແມ່ນໄດ້ສ້າງຕັ້ງ ຄະນະຊີ້ນຳສະເພາະດ້ານວຽກງານເຣດ+ ຂັ້ນແຂວງ (PRTF) ແລະ ຫ້ອງການເຣດ+ ຂັ້ນແຂວງ (PRO) ໃນເດືອນ ພຶດສະພາ ປີ 2016, ເພື່ອເປັນກົນຈັກໃນການດຳເນີນວຽກງານເຣດ+ ຂັ້ນແຂວງ. ພາຍຫຼັງການແຕ່ງຕັ້ງ ໄດ້ມີການຈັດຝຶກອົບຮົມຂຶ້ນຈຳນວນ 4 ຄັ້ງ ເພື່ອ ເພີ່ມທະວີ ຄວາມເຂົ້າໃຈໃນວຽກງານເຣດ+ ແລະ ພາລະບົດບາດຂອງເຂົາເຈົ້າ.

ການສ້າງແຜນປະຕິບັດງານເຣດ+ ຂັ້ນແຂວງ ແມ່ນວຽກງານທຳອິດ ຂອງແຂວງ, ເຊິ່ງໄດ້ມີການຈັດປະຊຸມປຶກສາຫາລືໃນຫຼາຍຂັ້ນ ເຊັ່ນ ຂັ້ນແຂວງ, ເມືອງ ແລະ ກຸ່ມບ້ານ. ຂະບວນການສ້າງແຜນດັ່ງກ່າວແມ່ນໄດ້ລວມມີ ການວິເຄາະການປ່ຽນແປງພື້ນທີ່ດິນ ແລະ ປ່າໄມ້, ການວິເຄາະສາເຫດ, ການສ້າງ PaMs, ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນເບື້ອງຕົ້ນ, ການວາງແຜນດ້ານການເງິນ ແລະ ອື່ນໆ. ກອງປະຊຸມປຶກສາຫາລື ຄັ້ງສຸດທ້າຍ ແມ່ນຈັດຂຶ້ນ ໃນເດືອນກັນຍາ 2017, ແລະ ຄາດວ່າ ຮ່າງສະບັບສຸດທ້າຍຂອງເອກະສານດັ່ງກ່າວ (ພາສາລາວ ແລະ ອັງກິດ) ແມ່ນຈະໄດ້ຖືກຮັບຮອງໂດຍ ເຈົ້າແຂວງໃນໄວໆນີ້.

ບັນດາພາກສ່ວນທີ່ກ່ຽວຂ້ອງແມ່ນໄດ້ມີຄວາມເຂົ້າໃຈເພີ່ມຕື່ມກ່ຽວກັບວຽກງານເຣດ+ ຜ່ານການມີສ່ວນຮ່ວມໃນຂະບວນການ ສ້າງແຜນປະຕິບັດງານເຣດ+ ຂັ້ນແຂວງ ແລະ ການເຂົ້າຮ່ວມກອງປະຊຸມ ແລະ ຝຶກອົບຮົມ. ນອກຈາກນີ້ ຍັງໄດ້ຈັດຝຶກອົບຮົມໃນຫຼາຍໆຄັ້ງ ກ່ຽວກັບວຽກງານການປົກປ້ອງ ແລະ ບົດບາດຍິງ-ຊາຍ ເຊິ່ງຈັດໂດຍ ໂຄງການ RECOFTC ຜ່ານແຜນງານຮ່ວມມືລະຫວ່າງ JICA-RECOFTC. ພ້ອມດຽວກັນນີ້ ໂຄງການ F-REDD ຍັງໄດ້ສະໜັບສະໜູນແຂວງ ໃນການເຮັດໃຫ້ແນວທາງຂອງແຂວງ ແລະ ແນວທາງຂອງ ແຜນງານການຫຼຸດຜ່ອນທາດອາຍພິດ (ER Program) ພາຍໃຕ້ກອງທຶນ FCPF Carbon Fund ມີຄວາມສອດຄ່ອງກັນ, ເຊິ່ງຫຼວງພະບາງ ເປັນໜຶ່ງໃນແຂວງເປົ້າໝາຍ ຂອງ ER Program.

**ກິດຈະກຳ 4-2 ຈັດຕັ້ງປະຕິບັດ ການທົດລອງນະໂຍບາຍປ່າໄມ້ບູລິມະສິດ ໃນຂັ້ນແຂວງ**

ໂຄງການແມ່ນໄດ້ ອອກແບບ 7 ກິດຈະກຳທົດລອງ (ຕາຕະລາງທີ 6) ໂດຍອີງຕາມ PaMS ທີ່ໄດ້ກຳນົດໄວ້ໃນ ແຜນປະຕິບັດງານເຣດ+ ຂັ້ນແຂວງ. ກິດຈະກຳຕ່າງໆ ແມ່ນສຸມໃສ່ ເພີ່ມທະວີຄວາມອາດສາມາດ ໃນການຄຸ້ມຄອງປ່າປ້ອງກັນ ເຊິ່ງມີພື້ນທີ່ກວມເອົາປະມານ 60 % ຂອງພື້ນທີ່ປ່າໄມ້ ທັງໝົດໃນແຂວງ. ສະນັ້ນ, ເຂດປ່າປ້ອງກັນ ພູເພິງ-ພູຜາທູນ-ຕາດກວາງຊີ ໄດ້ຖືກຄັດເລືອກ ໃຫ້ເປັນເຂດທົດລອງ ເຊິ່ງໄດ້ຈັດຕັ້ງປະຕິບັດຫຼາຍໆກິດຈະກຳໃນເບື້ອງຕົ້ນ ເຊັ່ນ: ເກັບກຳຂໍ້ມູນດ້ານການຄຸ້ມຄອງເຂດດັ່ງກ່າວ, ພູມີປະເທດ, ລະບົບນິເວດ, ຊຸມຊົນທ້ອງຖິ່ນ, ແລະ ການຄົ້ນຄ້ວາຄວາມເປັນໄປໄດ້ ຂອງການຈ່າຍພັນທະການບໍລິການດ້ານລະບົບນິເວດ. ຜ່ານການຕົກລົງເຫັນດີ, ກິດຈະກຳທົດລອງຕ່າງໆ ແມ່ນຈະໄດ້ຈັດຕັ້ງປະຕິບັດ ໂດຍກາຍຮ່ວມມືກັບ ໂຄງການ LENS2 ຂອງທະນາຄານໂລກ (LENS2/WB).

**ຕາຕະລາງທີ 6: ກິດຈະກຳທົດລອງ ທີ່ຈະຈັດຕັ້ງປະຕິບັດ**

| ລ/ດ | ກິດຈະກຳ ທີ່ນຳສະເໜີ | ການຈັດຕັ້ງປະຕິບັດ |
|---|---|---|
| 1 | ການກຳນົດເຂດ 3 ປະເພດປ່າ (ປ່າອະນຸລັກ, ປ່າປ້ອງກັນ, ປ່າຜະລິດ) | 2018 |
| 2 | ການສ້າງຕັ້ງຄະນະຄຸ້ມຄອງ ເຂດປ່າປ້ອງກັນ ພູເພິງ-ພູຜາທູນ-ຕາດກວາງຊີ | ສຳເລັດໃນຂັ້ນເມືອງ<br>ຂັ້ນແຂວງ ແມ່ນກຳລັງດຳເນີນ |
| 3 | ການສ້າງແຜນ ຄຸ້ມຄອງ ເຂດປ່າປ້ອງກັນ ພູເພິງ-ພູຜາທູນ-ຕາດກວາງຊີ | ກຳລັງຮ່າງແຜນສະບັບສຸດທ້າຍ |
| 4 | ການສຶກສາຄວາມເປັນໄປໄດ້ໃນການນຳສະເໜີ ການຈ່າຍພັນທະດ້ານການບໍລິການລະບົບນິເວດປ່າໄມ້ (PFES) ໃນເຂດປ່າປ້ອງກັນ ພູເພິງ-ພູຜາທູນ-ຕາດກວາງຊີ | ສຳເລັດ |
| 5 | ທົດລອງ ກິດຈະກຳການທ່ອງທ່ຽວແບບອະນຸລັກທຳມະຊາດ ໃນເຂດເຂດປ່າປ້ອງກັນ ພູເພິງ-ພູຜາທູນ-ຕາດກວາງຊີ | 2018 |
| 6 | ຝຶກອົບຮົມໃຫ້ພະນັກງານ ຂັ້ນແຂວງ ແລະ ເມືອງ ໃນວຽກງານ ການວາງແຜນການນຳໃຊ້ດິນຂັ້ນແຂວງ (PLUP), ແລະ ການພັດທະນາຊີວິດການເປັນຢູ່. | 2018 |
| 7 | ການບັງຄັບໃຊ້ ກົດໝາຍປ່າໄມ້ ແລະ ການຄຸ້ມຄອງເຂດເຂດປ່າປ້ອງກັນ ພູເພິງ-ພູຜາທູນ-ຕາດກວາງຊີ, ແລະ ການຕິດຕາມກວດກາປ່າໄມ້ ແບບ near-real-time | 2018 |

**ກິດຈະກຳ 4-3 ສະໜັບສະໜູນການຈັດຕັ້ງປະຕິບັດການຕິດຕາມກວດກາປ່າໄມ້ ເພື່ອນຳໃຊ້ເຂົ້າໃນວຽກງານເຣດ+ ຂັ້ນແຂວງ**

ໂຄງການ F-REDD ແມ່ນໄດ້ເລີ່ມປຶກສາຫາລືກັບ ຄູ່ຮ່ວມງານກໍ່ຄື ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ກ່ຽວກັບວິທີການ ແລະ ຮູບແບບການຈັດຕັ້ງປະຕິບັດ ເພື່ອຕິດຕາມກວດກາ ການຕັດໄມ້ແບບຜິດກົດໝາຍ ເພື່ອການຫັນປ່ຽນ ທີ່ດິນປ່າໄປເປັນທີ່ດິນກະສິກຳ (ລວມມີ ການຖາງປ່າເຮັດໄຮ່), ໂຄງການເຂື່ອນໄຟຟ້າ, ແລະ ການສ້າງທາງ, ເຊິ່ງໄດ້ຖືກກຳນົດໃຫ້ເປັນສາເຫດຫຼັກຂອງ ການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ ຢູ່ໃນແຂວງ. ສືບຕໍ່ຈາກການປຶກສາຫາລືທີ່ໄດ້ກ່າວມາຂ້າງເທິງນີ້, ວຽກງານໃນກິດຈະກຳ 4-3 ແມ່ນຈະໄດ້ຈັດຕັ້ງປະຕິບັດ ໃນໄລຍະທີ 2 ຂອງໂຄງການ.

**ກິດຈະກຳ 4-4 ສົ່ງເສີມການຮ່ວມມືກ່ຽວກັບວຽກງານເຣດ+ ລະຫວ່າງ ສູນກາງ ແລະ ແຂວງ**

ໂຄງການຕົວແບບ JCM-REDD+ ທີ່ຈັດຕັ້ງປະຕິບັດໂດຍ ນິຕິບຸກຄົນຈາກປະເທດຍີ່ປຸ່ນ ຢູ່ເມືອງໂພນໄຊ ແຂວງຫຼວງພະບາງ ແມ່ນໜຶ່ງໃນກິດຈະກຳຕົວແບບ ທີ່ປະກອບສ່ວນໃນວຽກງານເຣດ+ ຂອງແຂວງ ເຊິ່ງໄດ້ລະບຸໄວ້ຢູ່ໃນແຜນປະຕິບັດງານເຣດ+ ຂັ້ນແຂວງ. ທີ່ຕັ້ງຂອງໂຄງການຕົວແບບ ແລະ ເຂດເປົ້າໝາຍຂອງແຜນງານ ER ແມ່ນຢູ່ໃນເຂດດຽວກັນ, ສະນັ້ນ ກົມປ່າໄມ້ ແລະ ນິຕິບຸກຄົນຈາກປະເທດຍີ່ປຸ່ນ ຕ້ອງໄດ້ມີການປະສານງານລະຫວ່າງທັງ 2 ໂຄງການນີ້ ຢ່າງຮີບດ່ວນ.

ພະນັກງານຂະແໜງການປ່າໄມ້ ຈຳນວນ 39 ທ່ານ ຈາກ 12 ເມືອງ ຢູ່ ແຂວງຫຼວງພະບາງ ໄດ້ເຂົ້າຮ່ວມຝຶກອົບຮົມ (2 ມື້) ໃນເດືອນ ຕຸລາ 2016. ຢູ່ໃນການຝຶກອົບຮົມ ດັ່ງກ່າວ ອະດີດຄູ່ຮ່ວມງານຂອງໂຄງການ PAREDD ໄດ້ອະທິບາຍວິທີການໃນການຄວບຄຸມການຕັດໄມ້ທຳລາຍປ່າ ເຊິ່ງລວມມີແນວທາງຂອງ PAREDD. ໂຄງການ F-REDD ຍັງໄດ້ ຕິດຕາມກວດກາຜົນໄດ້ຮັບຂອງໂຄງການ PAREDD ໃນເມືອງຊຽງເງິນ ແລະ ໄດ້ສະຫຼຸບເປັນບົດລາຍງານ.

ຄວາມຈຳກັດດ້ານການເງິນ ແມ່ນເປັນປັດໄຈຫຼັກ ທີ່ເຮັດໃຫ້ແຂວງ ບໍ່ສາມາດຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແນວທາງຂອງ PAREDD ໃຫ້ທົ່ວແຂວງໄດ້. ເພື່ອແກ້ໄຂບັນຫານີ້, ໂຄງການ F-REDD ແມ່ນໄດ້ຕົກລົງເຫັນດີຮ່ວມມືກັບ ໂຄງການ LENS2/WB ໃນການປັບປຸງການຄຸ້ມຄອງເຂດປ່າປ້ອງກັນ ພູເພິງ-ພູຜາທູນ-ຕາດກວາງຊີ, ແລະ ນຳໃຊ້ທຶນຂອງໂຄງການ LENS2/WB ໃນການຈັດຕັ້ງປະຕິບັດແນວທາງຂອງ PAREDD ໃນບາງບ້ານ ທີ່ຕັ້ງຢູ່ໃນເຂດປ່າປ້ອງກັນດັ່ງກ່າວ. ໂຄງການ F-REDD ຍັງໄດ້ປະສານສົມທົບກັບອົງການ GIZ ໃນການສະເໜີຂໍທຶນຂອງເຂົາເຈົ້າ ຕໍ່ກັບກອງທຶນ Green Climate Fund (GCF) ເຊິ່ງມີເປົ້າໝາຍໃນການສະໜັບສະໜູນການຈັດຕັ້ງປະຕິບັດ ແຜນປະຕິບັດງານເຣດ+ ຂັ້ນແຂວງ ຢູ່ທັງ 6 ແຂວງ ເປົ້າໝາຍຂອງແຜນງານ ER, ເຊິ່ງກໍ່ລວມມີແຂວງຫຼວງພະບາງ.

**ບັນຫາ ແລະ ສິ່ງທ້າທາຍ**

- ຄວນມີການທົບທວນຄືນ ໂຄງຮ່າງການຈັດຕັ້ງປະຕິບັດໂຄງການ ຢູ່ໃນຂັ້ນແຂວງ ເພື່ອໃຫ້ສອດຄ່ອງກັບການປັບປຸງໂຄງຮ່າງການຈັດຕັ້ງຂອງລັດຖະບານ.

- ໃນເບື້ອງຕົ້ນ ໂຄງການ F-REDD ແມ່ນມີແຜນທີ່ຈະປະສານສົມທົບດ້ານວິຊາການ ໃນແຂວງຫຼວງພະບາງ ກັບໂຄງການ LENS2/WB ໃນວຽກງານທົບທວນຄືນເຂດ 3 ປະເພດປ່າ ໃນທົ່ວປະເທດ, ແຕ່ເນື່ອງຈາກວ່າ ໂຄງການ LENS2/WBs ໄດ້ຍົກເລີກ ການສະໜັບສະໜູນວຽກງານດັ່ງກ່າວ, ໂຄງການ F-REDD ຕ້ອງໄດ້ພິຈາລະນາ ຫາທາງເລືອກອື່ນ ເພື່ອສືບຕໍ່ວຽກງານດັ່ງກ່າວ.

- ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ (ຄູ່ຮ່ວມງານຂອງໂຄງການ) ແມ່ນຕ້ອງໄດ້ ປະສານສົມທົບກັບ ພະແນກ ຕິດຕາມກວດກາປ່າໄມ້ ແຂວງ (ບໍ່ແມ່ນຄູ່ຮ່ວມງານຂອງໂຄງການ) ເພື່ອຈັດຕັ້ງປະຕິບັດ ກິດຈະກຳ ການຕິດຕາມກວດກາປ່າໄມ້.

- ເນື່ອງຈາກອົງການໄຈກາ ແມ່ນເຫັນດີ ທີ່ຈະສະໜັບສະໜູນວຽກງານເຣດ+ ຢູ່ແຂວງອຸດົມໄຊ ເພີ່ມຕື່ມ, ສະນັ້ນ ຕ້ອງໄດ້ຮີບດ່ວນ ສ້າງກິດຈະກຳທົດລອງ ຂຶ້ນມາ ໃນຊ່ວງໄລຍະທີ 2 ຂອງໂຄງການ ນີ້.

- ເນື່ອງຈາກວ່າອົງການ GiZ ມີຈຸດປະສົງ ທີ່ຈະນຳໃຊ້ງົບປະມານຂອງ GCF ໃນວຽກງານການສະໜັບສະໜູນການຈັດຕັ້ງ

ປະຕິບັດ ແຜນປະຕິບັດງານເຣດ+ ຂັ້ນແຂວງ, ເຊິ່ງລວມມີ ແຂວງຫຼວງພະບາງ ແລະ ອຸດົມໄຊ, ໂຄງການ F-REDD ແມ່ນຈະໄດ້ຕິດຕາມຄວາມຄືບໜ້າ ແລະ ນຳສະເໜີ ແນວທາງຊ່ວຍເຫຼືອ ເມື່ອມີຄວາມຕ້ອງການ.

**(5) ຜົນໄດ້ຮັບອື່ນໆ**

ຄະນະຊີ້ນຳປະສານງານຮ່ວມ (JCC)

ໃນຊ່ວງໄລຍະທີ່ 1 ຂອງໂຄງການ ແມ່ນໄດ້ຈັດກອງປະຊຸມ JCC ທັງໝົດ 3 ຄັ້ງ: ຄັ້ງທຳອິດໃນວັນທີ 12 ພະຈິກ 2015; ຄັ້ງທີ 2 ໃນວັນທີ 12 ພຶດສະພາ 2015; ແລະ ຄັ້ງທີ 3 ໃນວັນທີ 13 ຕຸລາ 2017 (ພ້ອມດຽວກັບການປະເມີນໄລຍະກາງຂອງໂຄງການ). ເນື່ອງຈາກມີການປັບປຸງໂຄງຮ່າງການຈັດຕັ້ງຂອງລັດຖະບານ, ກອງປະຊຸມ ຄັ້ງທີ 1 ແລະ 2 ແມ່ນມີໄລຍະເວລາຫ່າງກັນພໍສົມຄວນ.

ການປະເມີນໄລຍະກາງ

ອົງການໄຈກາ ແລະ ລັດຖະບານ ສປປ ລາວ ໄດ້ຮ່ວມກັນດຳເນີນ ການປະເມີນໄລຍະກາງ ຂອງໂຄງການ ໃນຕົ້ນເດືອນ ຕຸລາ 2017 ມີຈຸດປະສົງເພື່ອປະເມີນຄວາມຄືບໜ້າ ແລະ ທົບທວນຄືນແນວທາງຈັດຕັ້ງປະຕິບັດຂອງໂຄງການ. ໂຄງການແມ່ນໄດ້ສະໜັບສະໜູນ ທີມງານປະເມີນໄລຍະກາງ ໂດຍການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ, ສະໜອງຂໍ້ມູນສະຫຼຸບຂອງໂຄງການ, ຈັດຕາຕະລາງນັດພົບພາກສ່ວນທີ່ກ່ຽວຂ້ອງ ແລະ ກະກຽມກອງປະຊຸມ JCC.

ກອງປະຊຸມປະຈຳປີ

ໂຄງການແມ່ນຈະຈັດກອງປະຊຸມປະຈຳປີ ຂຶ້ນທຸກໆປີ ເພື່ອແລກປ່ຽນຂໍ້ມູນ ແລະ ລາຍງານຄວາມຄືບໜ້າຂອງໂຄງການຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຜູ້ໃຫ້ທຶນຕ່າງໆ. ໃນຊ່ວງໄລຍະທີ 1 ຂອງໂຄງການ ແມ່ນໄດ້ຈັດກອງປະຊຸມທັງໝົດ 2 ຄັ້ງ; ຄັ້ງທີ 1 ໃນວັນທີ 24 ກຸມພາ 2016 ແລະ ຄັ້ງທີ 2 ໃນວັນທີ 24 ພຶດສະພາ 2017.

ກິດຈະກຳການປະຊາສຳພັນ ແລະ ການເຂົ້າຮ່ວມກອງປະຊຸມ ໃນລະດັບສາກົນ

ໂຄງການ ແມ່ນໄດ້ເຮັດກິດຈະກຳ ການປະຊາສຳພັນ ເຊັ່ນ: ການສ້າງແຜນພັບ, ເວບໄຊ ໂຄງການ (ຢູ່ໃນ ເວບໄຊ ຂອງອົງການໄຈກາ), ຈົດໝາຍຂ່າວຂອງໂຄງການ, ການເຂົ້າຮ່ວມ ແລະ ສະເໜີບົດ ໃນກອງປະຊຸມໃນລະດັບສາກົນ ແລະ ອື່ນໆ, ເພື່ອເປັນການ ເຜີຍແຜ່ຂໍ້ມູນ ແລະ ຜົນໄດ້ຮັບ ຂອງໂຄງການ ໃຫ້ມີການຮັບຮູ້ຢ່າງກ້ວາງຂວາງ. ພ້ອມດຽວກັນນັ້ນ, ໂຄງການຍັງໄດ້ໃຫ້ການຮ່ວມມືຕໍ່ການສະເໜີ ຂອງອົງການໄຈກາ ໃນຫຼາຍໆຄັ້ງ ກ່ຽວກັບກິດຈະກຳການປະຊາສຳພັນ ແລະ ໄດ້ຕ້ອນຮັບການລົງທັດສະນາສຶກສາ ແລະ ຢ້ຽມຢາມ ໂຄງການ ຈາກຫຼາຍໆພາກສ່ວນ ເຊັ່ນ: ພະນັກງານ ຂອງ JICA ທີ່ກ່ຽວຂ້ອງ, ບໍລິສັດເອກະຊົນຂອງຍີ່ປຸ່ນ, ສະຖາບັນສຶກສາ ແລະ NGOs.

ແຜນງານຮ່ວມມື JICA-RECOFTC

ຫຼາຍໆກິດຈະກຳ ແມ່ນໄດ້ຖືກຈັດຕັ້ງປະຕິບັດ ຜ່ານແຜນງານຮ່ວມມື JICA-RECOFTC ດັ່ງລຸ່ມນີ້:

- 2015 – 2016: ການປະເມີນຄວາມຕ້ອງການ ສຳລັບການສ້າງຄວາມອາດສາມາດ ໃນການຈັດຕັ້ງປະຕິບັດ ກິດຈະກຳເຣດ+ ຂອງພະນັກງານແຂວງຫຼວງພະບາງ ທີ່ມີສ່ວນຮ່ວມໃນການບໍລິຫານປ່າໄມ້ ແລະ ການກະກຽມແຜນການສ້າງຄວາມອາດສາມາດ ຂອງປີ ຕໍ່ໆ ໄປ.
- 2016 – 2017: ກະກຽມ PaMS ແລະ ສະໜອງການຝຶກອົບຮົມດ້ານການປົກປ້ອງ ໃຫ້ເມືອງຢູ່ໃນແຂວງຫຼວງພະບາງ, ແລະ ທົບທວນຄືນ ແລະ ແຈກຢາຍເອກະສານຕ່າງໆ ເພື່ອເຜີຍແຜ່ຂໍ້ມູນ ທີ່ໂຄງການ RECOFTC ໄດ້ກະກຽມ ແລະ ເຮັດຜ່ານມາ ເຊິ່ງລວມມີການສະໜັບສະໜູນຈາກອົງການໄຈກາ.

## 2-2 ຈຸດປະສົງຂອງໂຄງການ ແລະ ຕົວຊີ້ວັດ

ຕາຕະລາງຂ້າງລຸ່ມນີ້ ແມ່ນການສະຫຼຸບຄວາມຄືບໜ້າ ອີງໃສ່ຈຸດປະສົງຂອງໂຄງການ ແລະ ຕົວຊີ້ວັດ. ຄາດວ່າ ຈຸດປະສົງຂອງໂຄງການ ແລະ ຕົວຊີ້ວັດ ຈະສາມາດບັນລຸໄດ້ ກ່ອນໂຄງການຈະສິ້ນສຸດລົງ ໃນເດືອນ ຕຸລາ 2020.

| | |
|---|---|
| **ຈຸດປະສົງຂອງໂຄງການ** | ສະໜັບສະໜູນການສ້າງຄວາມເຂັ້ມແຂງ ສໍາລັບການຄຸ້ມຄອງປ່າໄມ້ແບບຍືນນານ ໃຫ້ແກ່ໜ່ວຍງານ ແລະ ວິຊາການ ທີ່ຮັບຜິດຊອບວຽກງານ REDD+ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍຜັນເອົາວຽກງານ REDD+ ເຂົ້າໃນຍຸດທະສາດຂອງຂະແໜງການ ຄຽງຄູ່ກັບການປັບປຸງຂໍ້ມູນຂ່າວສານທາງດ້ານຊັບພະຍາກອນປ່າໄມ້. |
| **ຕົວຊີ້ວັດ** | 1. ຍຸດທະສາດ ປີ 2020 ສະບັບປັບປຸງ ໄດ້ຮັບການຮັບຮອງ. |
| | 2. ການດໍາເນີນງານກ່ຽວກັບລະບົບການຕິດຕາມກວດກາປ່າໄມ້ແຫ່ງຊາດ (NFMS) ແມ່ນປະຕິບັດຕາມກອບອະນຸສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC) |
| | 3. ອີງຕາມຂໍ້ມູນຂອງລະບົບການຕິດຕາມກວດກາປ່າໄມ້ແຫ່ງຊາດ (NFMS), ປະສິດທິຜົນຂອງກິດຈະກໍາເຣດ+ ແມ່ນໄດ້ຮັບການປະເມີນໂດຍພາກສ່ວນທີ່ກ່ຽວຂ້ອງ (ເຊັ່ນ: ກຊສ, ກປ, ພະນັກງານທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາອື່ນໆ) ໂດຍຜ່ານຂັ້ນຕອນການປຶກສາຫາລືຮ່ວມກັນ |
| | 4. ຜົນໄດ້ຮັບຂອງກິດຈະກໍາໃນແຂວງຫລວງພະບາງແມ່ນໄດ້ນໍາໃຊ້ສໍາລັບການກໍານົດນະໂຍບາຍປ່າໄມ້/ເຣດ+ ແຫ່ງຊາດ |
| **ຄວາມຄືບໜ້າ** | ຄວາມຄືບໜ້າ ຈົນຮອດສິ້ນສຸດໄລຍະທີ 1 ຂອງໂຄງການ ແມ່ນສາມາດສະຫຼຸບໄດ້ ດັ່ງລຸ່ມນີ້:<br>1. ກົມປ່າໄມ້ ໄດ້ຢັ້ງຢືນວ່າ ການທົບທວນຄືນ ຍຸດທະສາດປ່າໄມ້ ຮອດປີ 2020 ຈະສໍາເລັດໃນປີ 2019.<br>2. ລະບົບຕິດຕາມກວດກາປ່າໄມ້ແຫ່ງຊາດ ແມ່ນສ້າງສໍາເລັດແລ້ວ ໃນໄລຍະທີ 1 ຂອງໂຄງການ. ໄດ້ລິເລີ່ມສຶກສາການປັບປຸງຄວາມປອດໄພຂອງລະບົບ ສໍາລັບການຮັກສາ, ຄຸ້ມຄອງ ແລະ ນໍາໃຊ້ຂອງບຸກຄົນທົ່ວໄປ.<br>3. ເນື່ອງຈາກ ຄາດວ່າ ຍຸດທະສາດເຣດ+ ແຫ່ງຊາດ ຈະຖືກຮັບຮອງໃນຕົ້ນປີ 2018, ຮ່າງສະບັບທໍາອິດຂອງເອກະສານ ERPD ກໍ່ຈະຖືກສົ່ງໃຫ້ ກອງທຶນ FCPF ໃນເດືອນ ມັງກອນ ປີ 2018 ເຊັ່ນດຽວກັນ.<br>4. ແຜນປະຕິບັດງານເຣດ+ ແຂວງຫຼວງພະບາງ ແມ່ນໄດ້ຖືກຮັບຮອງແລ້ວ, ແລະ ໄດ້ເລີ່ມຈັດຕັ້ງປະຕິບັດກິດຈະກໍາຕົວແບບ. |
| **ຄາດໝາຍ** | ຄາດໝາຍການບັນລຸຈຸດປະສົງຂອງໂຄງການ ໃນໄລຍະສິ້ນສຸດໄລຍະທີ 1 ຂອງໂຄງການ ມີດັ່ງລຸ່ມນີ້:<br>1. ກົມປ່າໄມ້ ໄດ້ລະບຸໄວ້ວ່າ ການທົບທວນຄືນຍຸດທະສາດປ່າໄມ້ ຮອດປີ 2020 ແມ່ນຈະສໍາເລັດໃນປີ 2019. ການສ້າງຍຸດທະສາດເຣດ+ ແຫ່ງຊາດ ແລະ ການທົບທວນຄືນກົດໝາຍປ່າໄມ້ ຄາດວ່າຈະສໍາເລັດ ກ່ອນການທົບທວນຄືນຍຸດທະສາດປ່າໄມ້ ຮອດປີ 2020 ຈະສໍາເລັດ. ສະນັ້ນ ເງື່ອນໄຂສໍາລັບການທົບທວນຄືນຍຸດທະສາດປ່າໄມ້ ທີ່ສະທ້ອນເຖິງຜົນໄດ້ຮັບຂອງກິດຈະກໍາເຫຼົ່ານີ້ ແມ່ນມີຢູ່ແລ້ວ. ນອກຈາກນີ້ ຍັງມີຄວາມຈໍາເປັນທີ່ຈະຕ້ອງໄດ້ ປະສານສົມທົບກັບວຽກງານຂອງ MRV ຂອງເຣດ+ (ຜົນໄດ້ຮັບທີ 2 ຂອງໂຄງການ) ແລະ ການປະເມີນປະສິດທິຜົນ ຂອງກິດຈະກໍາ ເຣດ+ (ຜົນໄດ້ຮັບທີ 3 ຂອງໂຄງການ).<br>2. ໂຄງການແມ່ນຈະສະໜັບສະໜູນ ຂັ້ນຕອນຕ່າງໆ ໃນການພັດທະນາລະບົບ NFMS ໃນໄລຍະທີ 2 ຂອງໂຄງການ, ໂດຍມີການປະສານສົມທົບກັບ ໂຄງການ/ຄູ່ຮ່ວມພັດທະນາ ອື່ນໆ. ການວາງເປົ້າໝາຍທີ່ເໝາະສົມແມ່ນມີຄວາມສໍາຄັນຫຼາຍ ເພື່ອໃຫ້ສາມາດບັນລຸໄດ້ ໃນໄລຍະສິ້ນສຸດໂຄງການ.<br>3. ການປະເມີນກິດຈະກໍາຂອງເຣດ+ ເພື່ອໃຫ້ສອດຄ່ອງກັບກອບຂອງຍຸດທະສາດເຣດ+ ແຫ່ງຊາດ ແລະ ເອກະສານ ERPD ແມ່ນສາມາດເຮັດໄດ້ (ຖ້າເອກະສານເຫຼົ່ານີ້ ໄດ້ຖືກຮັບຮອງຢ່າງເປັນທາງການແລ້ວ), ໂດຍອີງຕາມຜົນໄດ້ຮັບຂອງ MRV (ຢູ່ໃນຜົນໄດ້ຮັບທີ 2 ຂອງໂຄງການ), ແລະ ການຕິດຕາມກວດກາຜົນການຈັດຕັ້ງປະຕິບັດກິດຈະກໍາເຣດ+. ການປະສານງານກັບວຽກງານການທົບທວນຄືນຍຸດທະສາດປ່າໄມ້ ຮອດປີ 2020 ແມ່ນມີຄວາມຈໍາເປັນ.<br>4. ຄວາມຮູ້ ແລະ ປະສົບການຈາກການຈັດຕັ້ງປະຕິບັດແຜນປະຕິບັດງານເຣດ+ ຂັ້ນແຂວງ ແມ່ນສາມາດນໍາມານໍາໃຊ້ ເຂົ້າໃນການສ້າງນະໂຍບາຍປ່າໄມ້ແຫ່ງຊາດ ເຊິ່ງກໍ່ລວມເຖິງ ຍຸດທະສາດເຣດ+ ແຫ່ງຊາດ. ການປະສານງານກັບຜົນໄດ້ຮັບທີ 1, 2, 3 ແມ່ນມີຄວາມຈໍາເປັນ. ໃນໄລຍະທີ 2 ຂອງໂຄງການ ແມ່ນຈະໄດ້ຂະຫຍາຍການສະໜັບສະໜູນ ໄປຫາແຂວງອຸດົມໄຊ. |

**3. ການທົບທວນແຜນແມ່ບົດ (PDM) ໃນຜ່ານມາ**

ແຜນແມ່ບົດຂອງໂຄງການ ແມ່ນໄດຮັບການທົບທວນຄືນ ຈຳນວນ 3 ຄັ້ງ ໃນຊ່ວງໄລຍະທີ 1 ຂອງໂຄງການ ຈາກສະບັບທຳອິດທີ່ໄດ້ຄັດຕິດຢູ່ໃນບົດບັນທຶກການປຶກສາຫາລື (R/D).

- ການທົບທວນຄືນ ຈາກສະບັບທີ 0 ມາເປັນ ສະບັບທີ 1 (ຮັບຮອງໃນກອງປະຊຸມ JCC ຄັ້ງທີ 1 ໃນວັນທີ 12 ພະຈິກ 2015).
- ການທົບທວນຄືນ ຈາກສະບັບທີ 1 ມາເປັນ ສະບັບທີ 2 (ຮັບຮອງໃນກອງປະຊຸມ JCC ຄັ້ງທີ 2 ໃນວັນທີ 12 ພຶດສະພາ 2017).
- ການທົບທວນຄືນ ຈາກສະບັບທີ 2 ມາເປັນ ສະບັບທີ 3 (ຮັບຮອງໃນກອງປະຊຸມ JCC ຄັ້ງທີ 3 ໃນວັນທີ 13 ຕຸລາ 2017).

## III.ຜົນການປະເມີນໄລຍະກາງ ຂອງໂຄງການ

**1. ການທົບທວນ ແລະ ການປະເມີນ ໂດຍນຳໃຊ້ ມາດຖານການປະເມີນ DAC.**

**1-1 ຄວາມກ່ຽວຂ້ອງ - ສູງ**

ນະໂຍບາຍ ແລະ ຮູບແບບ ຂອງໂຄງການ ແມ່ນໄດ້ຖືກປະເມີນໃຫ້ຢູ່ໃນເກນ ຄວາມກ່ຽວຂ້ອງ "ສູງ" ເພາະມີຄວາມສອດຄ່ອງກັບ ນະໂຍບາຍຂອງລັດຖະບານ ສປປ ລາວ. ຄວາມຕ້ອງການຂອງຂະແໜງການປ່າໄມ້ ຢູ່ໃນ ສປປ ລາວ ແລະ ນະໂຍບາຍການຊ່ວຍເຫຼືອຈາກປະເທດຍີ່ປຸ່ນ ໃຫ້ແກ່ ສປປ ລາວ ແລະ ຜົນໄດ້ຮັບຕ່າງໆ ແມ່ນຖືກອອກແບບເພື່ອ ຜັນຂະຫຍາຍຫມາກຜົນຂອງໂຄງການ ທີ່ສະໜັບສະໜູນໂດຍ ອົງການໄຈກາ ແລະ ອົງການການອື່ນໆ ໃນຜ່ານມາ, ດັ່ງລາຍລະອຽດດັ່ງລຸ່ມນີ້:

1) ຄວາມສອດຄ່ອງຕໍ່ນະໂຍບາຍຂອງລັດຖະບານ ສປປ ລາວ ເຊັ່ນ: NSEDP ຄັ້ງທີ 8 (ເຊິ່ງລວມມີວຽກງານເຣດ+), ຍຸດທະສາດປ່າໄມ້ຮອດປີ 2020 ແລະ ອື່ນໆ;
2) ຄວາມສອດຄ່ອງກັບ ຄວາມຕ້ອງການຂອງກຸ່ມເປົ້າໝາຍ ເຊັ່ນ: ຜູ້ກຳນົດນະໂຍບາຍ ແລະ ພະນັກງານວິຊາການ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ;
3) ຄວາມສອດຄ່ອງກັບ ນະໂຍບາຍການຊ່ວຍເຫຼືອຈາກປະເທດຍີ່ປຸ່ນ ໃຫ້ແກ່ ສປປ ລາວ ເຊິ່ງ "ການພັດທະນາກະສິກຳ ແລະ ການອະນຸລັກປ່າໄມ້" ແມ່ນ 1 ໃນ 4 ບຸລິມະສິດໃນການສະໜັບສະໜູນ ຂອງລັດຖະບານຍີ່ປຸ່ນ; ແລະ
4) ຄວາມເໝາະສົມຂອງຮູບແບບຂອງໂຄງການ, ເຊິ່ງມີໂຄງສ້າງທີ່ເໝາະສົມ ແລະ ໄດ້ລວມເອົາຊັບສິນ ຂອງການຮ່ວມມື ຈາກລັດຖະບານຍີ່ປຸ່ນ ໃນຜ່ານມາ.

**1-2 ປະສິດທິພາບ - ປານກາງ**

ຜ່ານການຈັດຕັ້ງປະຕິບັດໂຄງການຈົນມາຮອດສິ້ນສຸດໄລຍະທີ 1 ສາມາດເບິ່ງເຫັນໄດ້ວ່າ ຈຸດປະສົງຂອງໂຄງການແມ່ນຈະສາມາດບັນລຸໄດ້ເມື່ອໂຄງການສິ້ນສຸດລົງ. ຕາມການສັງເກດການແມ່ນບໍ່ມີປັດໄຈພາຍນອກ ໃດ ທີ່ຈະເປັນອຸປະສັກໃນການບັນລຸຈຸດປະສົງຂອງໂຄງການ. ເຖິງຢ່າງໃດກໍ່ຕາມ, ກໍ່ຍັງມີຄວາມກັງວົນຕໍ່ຄວາມລ່າຊ້າ ໃນການທົບທວນຄືນໂຄງຮ່າງການຈັດຕັ້ງຂອງຂະແໜງການປ່າໄມ້. ສະນັ້ນ ປະສິດທິພາບ ຂອງໂຄງການແມ່ນຖືກປະເມີນໃຫ້ຢູ່ໃນເກນ "ປານກາງ", ດັ່ງລາຍລະອຽດດັ່ງລຸ່ມນີ້:

1) ຄາດໝາຍການບັນລຸຈຸດປະສົງຂອງໂຄງການ ແມ່ນຈັດຢູ່ໃນເກນ "ສູງ" ເພາະວ່າການສະໜັບສະໜູນດ້ານວິຊາການຂອງຊ່ຽວຊານຍີ່ປຸ່ນ ແມ່ນມີປະສິດທິພາບ.
2) ຕ້ອງໄດ້ຕິດຕາມຢ່າງໃກ້ຊິດວ່າ ການປັບປຸງໂຄງຮ່າງການຈັດຕັ້ງຂອງຂະແໜງການປ່າໄມ້ ຈະມີຜົນກະທົບຕໍ່ໂຄງການຫຼາຍປານໃດ.

### 1-3 ປະສິດທິຜົນ - ປານກາງ

ອົງການໄຈກາ ແລະ ລັດຖະບານ ສປປ ລາວ ແມ່ນໄດ້ປະກອບສ່ວນຕາມແຜນທີ່ວາງໄວ້ ແລະ ໂດຍລວມແລ້ວ ການປະກອບສ່ວນດັ່ງກ່າວແມ່ນໄດ້ຖືກນຳໃຊ້ຢ່າງເໝາະສົມ ແລະ ມີປະສິດທິຜົນ ໃນແຕ່ລະຜົນໄດ້ຮັບຂອງໂຄງການ ເຖິງແມ່ນວ່າການທົບທວນຄືນໂຄງຮ່າງການຈັດຕັ້ງ ມີຜົນກະທົບຕໍ່ໂຄງການໃນລະດັບໜຶ່ງ. ສະນັ້ນ ປະສິດທິຜົນຂອງໂຄງການ ແມ່ນຖືກປະເມີນໃຫ້ຢູ່ໃນເກນ "ປານກາງ", ດັ່ງລາຍລະອຽດດັ່ງລຸ່ມນີ້:

1) ໂຄງການແມ່ນມີຄວາມຄືບໜ້າຕາມແຜນທີ່ວາງໄວ້ ເຊິ່ງລວມມີການດັດປັບໃນບາງກິດຈະກຳ. ຄູ່ຮ່ວມງານໃໝ່ຂອງໂຄງການ ຄວນໄດ້ຮັບການແຕ່ງຕັ້ງ ຢ່າງຮີບດ່ວນ.
2) ການປະກອບສ່ວນຈາກອົງການໄຈກາ ແລະ ລັດຖະບານ ສປປ ລາວ ແມ່ນມີປະສິດທິຜົນດີ ເຊິ່ງເຮັດໃຫ້ກິດຈະກຳຕ່າງໆ ມີຄວາມຄືບໜ້າ (ເບິ່ງ II-1).

### 1-4 ຜົນກະທົບ - ຍັງບໍ່ສາມາດປະເມີນໄດ້

ເນື່ອງຈາກໂຄງການຍັງຢູ່ໃນໄລຍະການຈັດຕັ້ງປະຕິບັດ ຈຶ່ງຍັງບໍ່ສາມາດ ປະເມີນຜົນກະທົບ (ຕາມຄາດໝາຍ ແລະ ບໍ່ຕາມຄາດໝາຍ) ຂອງໂຄງການໄດ້ເທື່ອ ຈົນກວ່າໂຄງການຈະສິ້ນສຸດລົງ, ດັ່ງລາຍລະອຽດດັ່ງລຸ່ມນີ້:

1) ເຖິງແມ່ນວ່າການຄາດຄະເນ ແມ່ນເປັນໄປໄດ້ຍາກ, ແຕ່ຖ້າຜົນໄດ້ຮັບຂອງໂຄງການແມ່ນສາມາດບັນລຸໄດ້ ກ່ອນໂຄງການຈະສິ້ນສຸດລົງ ແລະ ຜົນໄດ້ຮັບເຫຼົ່ານັ້ນ ໄດ້ຖືກນາໝູນໃຊ້ຢ່າງຕໍ່ເນື່ອງ ຈາກຝ່າຍລາວ, ຄາດໝາຍຜົນກະທົບກໍ່ຈະສາມາດບັນລຸໄດ້. ສຳລັບໄລຍະທີ 2 ຂອງໂຄງການ, ການສ້າງສິ່ງແວດລ້ອມທີ່ດີ ໃຫ້ແກ່ໂຄງການ ແລະ ການສືບຕໍ່ສ້າງຄວາມອາດສາມາດ ໃຫ້ຄູ່ຮ່ວມງານ ແມ່ນມີຄວາມສຳຄັນຫຼາຍ.

### 1-5 ຄວາມຍືນຍົງ - ປານກາງ

ດ້ານຄວາມຍືນຍົງຂອງໂຄງການ ແມ່ນຖືກປະເມີນໃຫ້ຢູ່ໃນເກນ "ປານກາງ, ດັ່ງລາຍລະອຽດດັ່ງລຸ່ມນີ້:

1) ຄວາມຍືນຍົງຂອງນະໂຍບາຍ ແມ່ນຄາດວ່າຈະຢູ່ໃນເກນສູງ ເພາະວ່າລັດຖະບານ ສປປ ລາວ ໄດ້ໃຫ້ຄວາມສຳຄັນຕໍ່ການອະນຸລັກ ແລະ ພັດທະນາປ່າໄມ້. ການໃຫ້ຄວາມສຳຄັນດັ່ງກ່າວ ຄວນຈະມີຢ່າງຕໍ່ເນື່ອງ ເຖິງແມ່ນວ່າໂຄງການຈະສິ້ນສຸດລົງ.
2) ຄາດວ່າກົມປ່າໄມ້ ຍັງຈະໄດ້ສືບຕໍ່ ນຳພາ ການຈັດຕັ້ງປະຕິບັດ ວຽກງານເຣດ+ ແລະ ກິດຈະກຳການຄຸ້ມຄອງປ່າໄມ້ ຫຼັງຈາກໂຄງການສິ້ນສຸດລົງ.
3) ຄວາມຍືນຍົງດ້ານການເງິນ ຖືວ່າຢູ່ໃນເກນທີ່ຕໍ່າ. ຄາດວ່າ ຝ່າຍລາວຈະໄດ້ເພີ່ມງົບປະມານ ສຳລັບວຽກງານດັ່ງກ່າວຈາກງົບປະມານຂອງລັດ ແລະ ຈາດແຫຼ່ງທຶນພາຍນອກອື່ນໆ ເຊັ່ນ: ການຈ່າຍພັນທະການນຳໃຊ້ລະບົບນິເວດ, ການຈ່າຍຕາມຜົນໄດ້ຮັບ ເຣດ+ (ກອງທຶນກາກບອນ FCPF, ແລະ ການຈ່າຍຕາມຜົນໄດ້ຮັບ GCF), ແລະ ອື່ນໆ.
4) ຄວາມຍືນຍົງດ້ານເຕັກໂນໂລຊີ ກໍ່ເປັນສິ່ງທ້າທ້າຍໜຶ່ງ. ຄວາມຮູ້ ແລະ ຄວາມອາດສາມາດຂອງອົງການຈັດຕັ້ງ ຄວນໄດ້ຮັບການຊຸກຍູ້ໃຫ້ດີຂຶ້ນ ເຊັ່ນ ການປະຕິບັດທີ່ເປັນມາດຕະຖານ ແລະ ລະບົບຄຸ້ມຄອງເອກະສານ.

## 2. ປັດໄຈ ທີ່ມີອິດທິພົນຕໍ່ ການຈັດຕັ້ງປະຕິບັດໂຄງການ ແລະ ການບັນລຸເປົ້າໝາຍຜົນໄດ້ຮັບ

1) ປັດໄຈ ດ້ານນອກ

ໂຄງການແມ່ນໄດ້ຮັກສາການສື່ສານທີ່ດີ ລະຫວ່າງ ທີມງານຝ່າຍລາວ ແລະ ຍີ່ປຸ່ນ ເຊິ່ງເຮັດໃຫ້ມີຄວາມເຂົ້າໃຈໄປໃນທິດທາງດຽວກັນ ເຊັ່ນ: ກອບ, ຂອບເຂດ ແລະ ເປົ້າໝາຍຂອງໂຄງການ. ການໝູນໃຊ້ຊັບສິນຕ່າງໆ ທີ່ໄດ້ມາຈາກການສະໜັບສະໜູນຈາກລັດຖະບານຍີ່ປຸ່ນ ໃນຜ່ານມາ ເຊັ່ນ: ຄວາມຮູ້ດ້ານວິຊາການ, ອຸປະກອນ, ຄອມພິວເຕີ ຊອບແວ, ສິ່ງເຫຼົ່ານີ້ແມ່ນໄດ້ນຳມາປະກອບສ່ວນເພີ່ມຕື່ມ ໃນການຈັດຕັ້ງປະຕິບັດໂຄງການ ເຊິ່ງເຮັດໃຫ້ຫຼາຍໆດ້ານບັນລຸເກີນກວ່າທີ່ຄາດ

ໝາຍໄວ້. ຊ່ຽວຊານຍີ່ປຸ່ນຈຳນວນໜຶ່ງ ແມ່ນມີປະສົບການຫຼາກຫຼາຍເຮັດວຽກຢູ່ໃນ ສປປ ລາວ ມາກ່ອນ, ແລະ ຍັງມີຊ່ຽວຊານຍີ່ປຸ່ນອີກ 2 ຄົນ ທີ່ປະຈຳຢູ່ໃນລາວ ທີ່ສາມາດອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດໂຄງການໃນແຕ່ລະວັນ.

ໂຄງການຍັງໄດ້ປະສານງານຂໍສະເໜີການສະໜັບສະໜູນ ຈາກໂຄງການ ແລະ ແຫຼ່ງທຶນອື່ນ. ການສຳຫຼວດປ່າໄມ້ແຫ່ງຊາດຄັ້ງທີ 2 ແມ່ນໜຶ່ງໃນຕົວຢ່າງທີ່ໄດ້ມີການແບ່ງສ່ວນການສະໜັບສະໜູນດ້ານການເງິນ ລະຫວ່າງ ກົມປ່າໄມ້, ອົງການໄຈກາ ແລະ ໂຄງການ FCPF Readiness. ໂຄງການຍັງໄດ້ຮັກສາ ການປະສານສົມທົບຢ່າງໃກ້ຊິດ ກັບໂຄງການ ແລະ ຄູ່ຮ່ວມພັດທະນາອື່ນໆ ເຊັ່ນ:ໂຄງການ FCPF Readiness, CliPAD, FAO, ແລະ ອື່ນໆ.

2) ປັດໄຈດ້ານລົບ

ເຖິງແມ່ນວ່າຜົນກະທົບ ຄາດວ່າຈະເປັນຜົນກະທົບດ້ານບວກ ໃນໄລຍະຍາວ, ແຕ່ວ່າການປັບປຸງໂຄງຮ່າງການຈັດຕັ້ງຂອງຂະແໜງການປ່າໄມ້ ຢູ່ໃນໄລຍະທີ 1 ຂອງໂຄງການ ໄດ້ສ້າງຜົນກະທົບດ້ານລົບ ຕໍ່ການຈັດຕັ້ງປະຕິບັດໂຄງການ ເຊັ່ນ: ການແຕ່ງຕັ້ງຄູ່ຮ່ວມງານຂອງໂຄງການ ທີ່ຍັງບໍ່ມີຄວາມຊັດເຈນ, ການຈັດກອງປະຊຸມ FSSWG, ແລະ ການທົບທວນຍຸດທະສາດປ່າໄມ້ ຮອດປີ 2020, ດັ່ງທີ່ໄດ້ກ່າວມາກ່ອນໜ້ານີ້.

ຊ່ຽວຊານຍີ່ປຸ່ນ ສ່ວນຫຼາຍ, ຍົກເວັ້ນ ຊ່ຽວຊານ 2 ຄົນທີ່ປະຈຳຢູ່ລາວ, ແມ່ນມາເຮັດວຽກແບບໄລຍະສັ້ນ ແຕ່ຫຼາຍຄັ້ງ, ເຊິ່ງໃນບາງຄັ້ງກໍ່ເຮັດໃຫ້ການຈັດຕັ້ງປະຕິບັດໂຄງການ ບໍ່ໄດ້ຮັບປະສິດທິຜົນເທົ່າທີ່ຄວນ.

ສຳລັບຄູ່ຮ່ວມງານບາງທ່ານ ຄວາມເຂົ້າໃຈຂອງເຂົາເຈົ້າຕໍ່ກິດຈະກຳຂອງໂຄງການ ແມ່ນຍັງມີຄວາມຈຳກັດ ເຊິ່ງອາດຈະຍ້ອນການບໍ່ໄດ້ເຂົ້າຮ່ວມປະຊຸມຢ່າງສະໝໍ່າສະເໝີ ແລະ ບໍ່ໄດ້ຕິດຕາມແຜນວຽກ.

## 3. ການປະເມີນຜົນຂອງການຄຸ້ມຄອງຄວາມສ່ຽງຂອງໂຄງການ

ດັ່ງທີ່ໄດ້ກ່າວມາຂ້າງເທິງ, ການປັບປຸງໂຄງຮ່າງການຈັດຕັ້ງໃໝ່ຂອງກົມປ່າໄມ້ ແລະ ຄວາມລ່າຊ້າໃນການແຕ່ງຕັ້ງຄູ່ຮ່ວມງານໃໝ່ຂອງໂຄງການ ແມ່ນໄດ້ມີຜົນກະທົບຕໍ່ການຈັດຕັ້ງປະຕິບັດໃນບາງກິດຈະກຳຂອງໂຄງການ. ໂຄງການ ແມ່ນຕິດຕາມຄວາມຄືບໜ້າຂອງການປັບປຸງດັ່ງກ່າວຢ່າງໃກ້ຊິດ ແລະ ສື່ສານກັບ ຜູ້ຮັກສາການ ບໍລິຫານໂຄງການ ເພື່ອຫຼຸດຜ່ອນຄວາມສ່ຽງຕ່າງໆ ທີ່ຈະມີຕໍ່ກິດຈະກຳຂອງໂຄງການ.

## 4. ບົດຮຽນຖອດຖອນໄດ້ ສຳລັບໂຄງການໃນໄລຍະທີ 2

ຊ່ຽວຊານຍີ່ປຸ່ນສ່ວນຫຼາຍ ກໍ່ຍັງຈະມາເຮັດວຽກໃນ ສປປ ລາວ ໃນຮູບແບບໄລຍະສັ້ນ ໃນໄລຍະທີ 2 ຂອງໂຄງການ, ສະນັ້ນ ການສື່ສານທີ່ດີລະຫວ່າງທີມງານຂອງໂຄງການ ກ່ອນ ແລະ ຫຼັງມາເຮັດວຽກ ແມ່ນຈະມີຄວາມສຳຄັນຫຼາຍ. ຊ່ຽວຊານຍີ່ປຸ່ນທັງ 2 ທ່ານ ທີປະຈຳຢູ່ໃນລາວ ຈະມີບົດບາດທີ່ສຳຄັນຫຼາຍ ໃນການອຳນວຍຄວາມສະດວກ ໃນການສື່ສານລະຫວ່າງທີມງານຂອງໂຄງການ ແລະ ຮັບປະກັນການຈັດຕັ້ງປະຕິບັດກິດຈະກຳ ໃຫ້ດຳເນີນໄປດ້ວຍດີ. ການປະສານງານດ້ານການສະໜັບສະໜູນຈາກໂຄງການ ແລະ ແຫຼ່ງທຶນ ອື່ນ ແມ່ນຍັງຈະໄດ້ສືບຕໍ່ ໃນໄລຍະທີ 2 ຂອງໂຄງການ.

## IV. ຕໍ່ກັບຜົນສຳເລັດຂອງເປົ້າໝາຍລວມ ຫຼັງຈາກໂຄງການສິ້ນສຸດລົງ

### 1. ຄາດໝາຍ ການບັນລຸເປົ້າໝາຍລວມ

ເປົ້າໝາຍລວມ ໝາຍເຖິງ ຜົນໄດ້ຮັບດ້ານບວກ ຈາກກິດຈະກຳຂອງໂຄງການ ເຊິ່ງຄາດວ່າຈະຍັງເຫັນຜົນ ຫຼັງຈາກໂຄງການສິ້ນສຸດໄດ້ແລ້ວ 3-5 ປີ. ຂໍ້ມູນສະຖານະພາບໃນປະຈຸບັນ ຂອງຕົວຊີ້ວັດ ການບັນລຸເປົ້າໝາຍລວມຂອງໂຄງການ ໃນໄລຍະທີ 1 ຂອງໂຄງການ ແມ່ນມີດັ່ງລຸ່ມນີ້:

ເປົ້າໝາຍລວມ: ການຄຸ້ມຄອງປ່າໄມ້ແບບຍືນນານ ໄດ້ຮັບການຊຸກຍູ້ສົ່ງເສີມ ໂດຍການຈັດຕັ້ງປະຕິບັດວຽກງານ REDD+ ຢ່າງເຕັມຮູບແບບ ແລະ ມີການປະສານສົມທົບກັບຍຸດທະສາດປ່າໄມ້.

ຕົວຊີ້ວັດທີ 1. ວຽກງານ MRV ຂອງເຣດ+ ແມ່ນໄດ້ຮັບການລາຍງານເປັນໄລຍະຜ່ານ BURs.

ຕົວຊີ້ວັດທີ 2. ວຽກງານການຄຸ້ມຄອງປ່າໄມ້ແບບຍືນນານ ແມ່ນມີຄວາມຄືບໜ້າ ແລະ ສອດຄ່ອງກັບ ຍຸດທະສາດປ່າໄມ້ ຮອດປີ 2020 ສະບັບປັບປຸງ.

ຕົວຊີ້ວັດທີ 3. ແຂວງຫຼວງພະບາງ ສາມາດບັນລຸ ການຫຼຸດລົງຂອງທາດອາຍພິດ ໄດ້ 10% ແລະ ເພີ່ມການກຳຈັດທາດອາຍກາກບອນ ໄດ້10% ພາຍໃນປີ 2025 ໂດຍອີງໃສ່ຂໍ້ມູນ ໃນປີ 2017.

ຕົວຊີ້ວັດທີ 1. ວຽກງານ MRV ຂອງເຣດ+ ແມ່ນໄດ້ຮັບການລາຍງານເປັນໄລຍະຜ່ານ BURs.

- ບັນດາປະເທດທີ່ກຳລັງພັດທະນາ ທີ່ເປັນສະມາຊິກ UNFCCC ເຊິ່ງກໍ່ລວມມີ ສປປ ລາວ ແມ່ນຕ້ອງໄດ້ປະຕິບັດຕາມລະບຽບການ ກໍ່ຄືຕ້ອງໄດ້ສົ່ງບົດລາຍງານ BUR (Biennial Update Report) ທຸກໆ 2 ປີ. ບົດລາຍງານ BUR ຕ້ອງໄດ້ລວມມີການສຳຫຼວດທາດອາຍເຮືອນກະຈົກ (GHG-I) ເຊິ່ງລວມເຖິງການປ່ອຍ ແລະ ການກຳຈັດ ທາດອາຍເຮືອນກະຈົກ ຈາກປ່າໄມ້.

- ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມປ່ຽນແປງດິນຟ້າອາກາດ, ແມ່ນມີແຜນທີ່ຈະສົ່ງບົດລາຍງານ BUR ຄັ້ງທຳອິດ ໃຫ້ UNFCCC ໃນຕົ້ນປີ 2019. ຄາດວ່າຈະໄດ້ນຳໃຊ້ຂໍ້ມູນ ແຜນທີ່ປະເພດປ່າໄມ້ ແລະ ຜົນການສຳຫຼວດປ່າໄມ້ແຫ່ງຊາດ ຈາກກົມປ່າໄມ້ ໃນການຄິດໄລ່ ການປ່ອຍ ແລະ ການກຳຈັດ ທາດອາຍເຮືອນກະຈົກ ສຳລັບແຕ່ລະປະເພດດິນ, ເຊິ່ງກໍ່ລວມເຖິງປ່າໄມ້. ວິຊາການຈາກກົມປ່າໄມ້ ແມ່ນໄດ້ເຂົ້າຮ່ວມຢູ່ໃນຄະນະວິຊາການ ເພື່ອກະກຽມ ການສຳຫຼວດທາດອາຍເຮືອນກະຈົກ (GHG-I).

- ໂຄງການແມ່ນໄດ້ປະສານງານກັບກົມປ່ຽນແປງດິນຟ້າອາກາດຢ່າງຕໍ່ເນື່ອງ ໂດຍຜ່ານກົມປ່າໄມ້ ເພື່ອໃຫ້ໄດ້ນຳໃຊ້ຜົນການຈັດຕັ້ງປະຕິບັດຂອງໂຄງການ ກໍ່ຄືຜົນໄດ້ຮັບຂອງ ວຽກງານ MRV (ໃນໄລຍະທີ 2 ຂອງໂຄງການ) ເຂົ້າຢູ່ໃນບົດລາຍງານ BUR ຄັ້ງທີ 2, ເຊິ່ງຫຼັງຈາກນັ້ນ ກໍ່ຈະໄດ້ນຳໃຊ້ເຂົ້າໃນວຽກງານ ການຈ່າຍຕາມຜົນໄດ້ຮັບຂອງ GCF ໃນປີ 2020 ແລະ ໃນຕໍ່ໜ້າ. ຫຼັງຈາກນັ້ນ ການເຊື່ອມໂຍງວຽກງານ MRV ແລະ BUR ກໍ່ຈະຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ຫຼັງຈາກໂຄງການສິ້ນສຸດ. ເຖິງຢ່າງໃດກໍ່ຕາມ ເພື່ອບັນລຸຈຸດປະສົງດັ່ງກ່າວ ການສ້າງຄວາມອາດສາມາດໃຫ້ໜ່ວຍງານທີ່ກ່ຽວຂ້ອງ ແມ່ນມີຄວາມສຳຄັນຫຼາຍ.

ຕົວຊີ້ວັດທີ 2. ວຽກງານການຄຸ້ມຄອງປ່າໄມ້ແບບຍືນນານ ແມ່ນມີຄວາມຄືບໜ້າ ແລະ ສອດຄ່ອງກັບ ຍຸດທະສາດປ່າໄມ້ ຮອດປີ 2020 ສະບັບປັບປຸງ.

- ຄວາມສຳເລັດຂອງຕົວຊີ້ວັດນີ້ ແມ່ນຈະອີງຕາມເນື້ອໃນຂອງຍຸດທະສາດປ່າໄມ້ ຮອດປີ 2020, ເຊິ່ງຈະໄດ້ຮັບການປັບປຸງຜ່ານການສະໜັບສະໜູນຂອງໂຄງການ ໃນໄລຍະທີ 2, ສະນັ້ນ ມັນຈະເປັນການຍາກທີ່ຈະຄາດຄະເນຄວາມຄືບໜ້າ ໃນການບັນລຸຕົວຊີ້ວັດນີ້ ໃນປະຈຸບັນ. ເຖິງຢ່າງໃດກໍ່ຕາມ ທຸກໆແຜນງານທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້ ແມ່ນຈະຖືກ

ສ້າງ ແລະ ຈັດຕັ້ງປະຕິບັດ ໂດຍອີງຕາມ ຍຸດທະສາດປ່າໄມ້.

ຕົວຊີ້ວັດທີ 3. ແຂວງຫຼວງພະບາງ ສາມາດບັນລຸ ການຫຼຸດລົງຂອງທາດອາຍພິດ ໄດ້ 10% ແລະ ເພີ່ມການກຳຈັດທາດອາຍກາກບອນ ໄດ້10% ພາຍໃນປີ 2025 ໂດຍອີງໃສ່ຂໍ້ມູນ ໃນປີ 2017.

- ຄາດວ່າ ລັດຖະບານ ສປປ ລາວ ຈະສົ່ງເອກະສານ ERPD ໃຫ້ກອງທຶນກາກບອນ FCPF ໃນຕົ້ນປີ 2018 ນີ້. ພວກເຮົາຄວນຄຳນຶງວ່າ ຂໍ້ມູນ FREL/FRL ແລະ ຄາດໝາຍຈຳນວນຕົວເລກການຫຼຸດລົງຂອງທາດອາຍພິດ ຢູ່ໃນບົດລາຍງານອາດມີການປ່ຽນແປງ ຜ່ານການປະເມີນດ້ານວິຊາການ. ມັນຍັງບໍ່ມີຄວາມແນ່ນອນວ່າ ເອກະສານ ERPD ຂອງ ສປປ ລາວ ຈະຖືກຮັບຮອງ ຢູ່ໃນກອງປະຊຸມ ກອງທຶນກາກບອນ ຫຼື ບໍ່ ເຊິ່ງຈະຈັດຂຶ້ນໃນເດືອນ ມິຖຸນາ 2018. ສະນັ້ນ, ຈະຕ້ອງໄດ້ຕີລາຄາຕົວຊີ້ວັດນີ້ຄືນໃໝ່ ໂດຍອີງຕາມ ການສະເໜີເອກະສານ ERPD ໃນອະນາຄົດ.